ສາລະບານ


ກົດໝາຍ ວ່າດ້ວຍພາສີ........................................................................6

ພາກທີ I ບົດບັນຍັດທົ່ວໄປ........................................................................6

ມາດຕາ 1. ຈຸດປະສົງ........................................................................6

ມາດຕາ 2. ນິຍາມພາສີ........................................................................6

ມາດຕາ 3. ນະໂຍບາຍຂອງລັດກ່ຽວກັບພາສີ........................................................................6

ມາດຕາ 4. ອະທິບາຍຄຳສັບ........................................................................7

ມາດຕາ 5. ອານາເຂດພາສີ........................................................................8

ມາດຕາ 6. ການປ່ຽນແປງອັດຕາພາສີໃນກໍລະນີຈຳເປັນ........................................................................8

ມາດຕາ 7. ສິນຄ້າທີ່ຕ້ອງເສຍພາສີ........................................................................8

ມາດຕາ 8. ພັນທະໃນການເສຍພາສີ........................................................................8

ມາດຕາ 9. ການພົວພັນຮ່ວມມືກັບສາກົນ........................................................................9

ພາກທີ II ການດຳເນີນການແຈ້ງພາສີ........................................................................9

ໝວດທີ 1 ການຈັດລະຫັດ ແລະ ຕົ້ນກຳເນີດສິນຄ້າ, ເຄື່ອງຂອງ........................................................................9

ມາດຕາ 10. ການຈັດລະຫັດສິນຄ້າ........................................................................9

ມາດຕາ 11. ຕົ້ນກຳເນີດສິນຄ້າ........................................................................9

ໝວດທີ 2 ມູນຄ່າແຈ້ງພາສີ ສິນຄ້າ, ເຄື່ອງຂອງ........................................................................9

ມາດຕາ 12. ມູນຄ່າແຈ້ງພາສີຂາອອກ........................................................................9

ມາດຕາ 13. ມູນຄ່າແຈ້ງພາສີຂາເຂົ້າ........................................................................10

ໝວດທີ 3 ສິນຄ້າ, ເຄື່ອງຂອງປະເພດຈຳກັດ ແລະ ຕ້ອງຫ້າມ........................................................................10

ມາດຕາ14. ສິນຄ້າ, ເຄື່ອງຂອງປະເພດຈຳກັດ........................................................................10

ມາດຕາ 15. ສິນຄ້າ, ເຄື່ອງຂອງປະເພດຕ້ອງຫ້າມ........................................................................10

ພາກທີ III ການແຈ້ງພາສີ, ການເສຍພາສີ ແລະ ພັນທະອື່ນໆ........................................................................11

ໝວດທີ 1 ລະບຽບການແຈ້ງພາສີ........................................................................11

ມາດຕາ 16. ການແຈ້ງພາສີໂດຍສັງເຂບ........................................................................11

ມາດຕາ 17. ການແຈ້ງພາສີເປັນລາຍລະອຽດ........................................................................12

ມາດຕາ 18. ການປະກອບເອກະສານແຈ້ງພາສີ........................................................................12

ມາດຕາ 19. ກຳນົດເວລາໃນການແຈ້ງພາສີ........................................................................12

ມາດຕາ 20. ຜູ້ບໍລິການແຈ້ງພາສີ........................................................................13

ມາດຕາ 21. ການບັນທຶກໃບແຈ້ງພາສີເປັນລາຍລະອຽດ........................................................................13

ໝວດທີ 2 ການເສຍພາສີ ແລະ ພັນທະອື່ນໆ........................................................................13

ມາດຕາ 22. ການຄິດໄລ່ຄ່າພາສີ ແລະ ພັນທະອື່ນໆ........................................................................13

ມາດຕາ 23. ວິທີເສຍພາສີ ແລະ ພັນທະອື່ນໆ........................................................................13

ໝວດທີ 3 ການນຳເອົາສິນຄ້າ, ເຄື່ອງຂອງ ອອກຈາກສາງ ຫຼື ດ່ານພາສີ........................................................................13

ມາດຕາ 24. ການກວດກາສິນຄ້າ, ເຄື່ອງຂອງ ໂດຍເຈົ້າໜ້າທີ່ພາສີ ..................... 13
ມາດຕາ 25. ການນຳເອົາສິນຄ້າ, ເຄື່ອງຂອງອອກຈາກສາງ ຫຼື ດ່ານພາສີ ............ 14
ໝວດທີ 4 ການຄຸ້ມຄອງເອກະສານກ່ຽວກັບພາສີ ............................................... 14
ມາດຕາ 26. ລະບຽບການຄຸ້ມຄອງເອກະສານ ................................................. 14
ມາດຕາ 27. ການຄຸ້ມຄອງເອກະສານໄວ້ຊົ່ວຄາວ ............................................ 15
ໝວດທີ 5 ການກວດກາ ແລະ ການສະເໜີຄືນກ່ຽວກັບການແຈ້ງພາສີ................. 15
ມາດຕາ 28. ການກວດຄືນການແຈ້ງເສຍພາສີ ................................................ 15
ມາດຕາ 29 ການສະເໜີຄືນກ່ຽວກັບການແຈ້ງພາສີ ........................................ 16
ພາກທີ IV ການເຄື່ອຍຍ້າຍສິນຄ້າ, ເຄື່ອງຂອງ ໂດຍມີການຄ້ຳປະກັນ
ແລະ ລະບອບສາງ .......................................................................... 16
ໝວດທີ 1 ລະບຽບການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງໂດຍມີການຄ້ຳປະກັນ ....... 16
ມາດຕາ 30. ການຄຸ້ມຄອງການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ .......................... 16
ມາດຕາ 31. ການສິ້ນສຸດການຄ້ຳປະກັນ ..................................................... 16
ໝວດທີ 2 ລະບຽບການຂົນສົ່ງສິນຄ້າ, ເຄື່ອງຂອງຜ່ານແດນ ............................ 17
ມາດຕາ 32. ການຂົນສົ່ງສິນຄ້າ, ເຄື່ອງຂອງຜ່ານດິນແດນຕ່າງປະເທດ................. 17
ມາດຕາ 33. ການຂົນສົ່ງສິນຄ້າ, ເຄື່ອງຂອງຜ່ານດິນແດນ ສ.ປ.ປ.ລາວ.............. 17
ໝວດທີ 3 ສາງສິນຄ້າ, ເຄື່ອງຂອງ ແລະ ລະບອບສາງ..................................... 18
ມາດຕາ 35. ລະບອບສາງ ......................................................................... 18
ມາດຕາ 36. ລະບຽບການຄຸ້ມຄອງສາງ ........................................................ 19
ໝວດທີ 4 ລະບຽບການສົ່ງອອກ-ນຳເຂົ້າຊົ່ວຄາວ ............................................ 19
ມາດຕາ 37. ການສົ່ງອອກສິນຄ້າ, ເຄື່ອງຂອງຊົ່ວຄາວທົ່ວໄປ........................... 19
ມາດຕາ 38. ການສົ່ງອອກຊົ່ວຄາວ ສິນຄ້າ, ເຄື່ອງຂອງປະເພດຈຳກັດ.................. 20
ມາດຕາ 39. ການນຳເຂົ້າສິນຄ້າ, ເຄື່ອງຂອງຊົ່ວຄາວທົ່ວໄປ ............................ 20
ມາດຕາ 40. ການຄ້ຳປະກັນການນຳເຂົ້າຊົ່ວຄາວ ........................................... 21
ພາກທີ V ສິນຄ້າ, ເຄື່ອງຂອງທີ່ຢູ່ພາຍໃຕ້ການຄວບຄຸມສະເພາະ.............................. 22
ມາດຕາ 41. ເງື່ອນໄຂໃນການຄວບຄຸມສະເພາະ ............................................ 22
ມາດຕາ 42. ເງື່ອນໄຂສິ້ນສຸດການຄວບຄຸມສະເພາະ ....................................... 22
ພາກທີ VI ການຍົກເວັ້ນພາສີ ແລະ ພັນທະອື່ນໆ................................................ 23
ມາດຕາ 43. ການຍົກເວັ້ນທົ່ວໄປ ............................................................... 23
ມາດຕາ 44. ການຍົກເວັ້ນ ແລະ ຫຼຸດຜ່ອນພາສີເພື່ອສົ່ງເສີມການລົງທຶນ ............... 24
ມາດຕາ 45. ການຍົກເວັ້ນພາສີທາງການທູດ ແລະ ອົງການຈັດຕັ້ງສາກົນ............ 24
ພາກທີ VII ພາສີກ່ຽວກັບເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ
ແລະ ເຂດປອດພາສີ ...................................................................... 24

ມາດຕາ 46. ລະບຽບພາສີກ່ຽວກັບເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ........ 24
ມາດຕາ 47. ເຂດ ແລະ ຮ້ານຄ້າປອດພາສີ ........ 25
ພາກທີ VIII ການໃຊ້ເຮືອຂົນສົ່ງຜູ້ໂດຍສານ ຫຼື ຂົນສົ່ງສິນຄ້າ, ເຄື່ອງຂອງຕາມລໍາແມ່ນໍ້າຊາຍແດນ ........ 25
ມາດຕາ 48. ການຂຶ້ນບັນຊີເຮືອຕາມແມ່ນໍ້າຊາຍແດນ ........ 25
ມາດຕາ 49. ລະບຽບພາສີກ່ຽວກັບການຂົນສົ່ງຕາມແມ່ນໍ້າຊາຍແດນ ........ 25
ພາກທີ IX ການກະທໍາຜິດທາງພາສີ ........ 26
ໝວດທີ 1 ການຈັດແບ່ງການກະທໍາຜິດທາງພາສີ ........ 26
ມາດຕາ 50. ປະເພດການກະທໍາຜິດ ........ 26
ມາດຕາ 51. ການກະທໍາຜິດສະຖານເບົາລະດັບທີໜຶ່ງ ........ 26
ມາດຕາ 52. ການກະທໍາຜິດສະຖານເບົາລະດັບທີສອງ ........ 27
ມາດຕາ 53. ການກະທໍາຜິດສະຖານເບົາລະດັບທີສາມ ........ 28
ມາດຕາ 54. ການກະທໍາຜິດສະຖານໜັກລະດັບທີໜຶ່ງ ........ 28
ມາດຕາ 55. ການກະທໍາຜິດສະຖານໜັກລະດັບທີສອງ ........ 28
ມາດຕາ 56. ການກະທໍາຜິດສະຖານໜັກລະດັບທີສາມ ........ 29
ມາດຕາ 57 ການກະທໍາຜິດສໍາລັບສິນຄ້າປະເພດຕ້ອງຫ້າມ ........ 29
ໝວດທີ 2 ຄວາມຮັບຜິດຊອບໃນການກະທໍາຜິດທາງພາສີ ........ 29
ມາດຕາ 58. ການຄອບຄອງສິນຄ້າ, ເຄື່ອງຂອງ ແລະ ພາຫະນະຂົນສົ່ງ ........ 29
ມາດຕາ 59. ຄວາມຮັບຜິດຊອບໃນການແຈ້ງພາສີ ........ 30
ມາດຕາ 60. ຄວາມຮັບຜິດຊອບທາງແພ່ງ ແລະ ອາຍາ ........ 30
ພາກທີ X ການດໍາເນີນຄະດີທາງພາສີ ........ 30
ໝວດທີ 1 ການດໍາເນີນການສືບສວນ-ສອບສວນ ........ 30
ມາດຕາ 61. ການສືບສວນ-ສອບສວນ ........ 30
ມາດຕາ 62. ການໃຫ້ຄວາມຮ່ວມມື ........ 31
ມາດຕາ 63. ການເຮັດຈົດໝາຍບັນທຶກ ........ 31
ມາດຕາ 64. ການເກັບຮັກສາຂອງກາງ ........ 32
ໝວດທີ 2 ການສົມຍອມຄະດີ ........ 32
ມາດຕາ 65. ການສົມຍອມ ........ 32
ມາດຕາ 66. ການສະເໜີຕໍ່ລັດຖະການພາສີ ........ 32
ໝວດທີ 3 ການຮ້ອງຟ້ອງ ........ 33
ມາດຕາ 67 ສິດໃນການຮ້ອງຟ້ອງ ........ 33
ມາດຕາ 68. ການຍື່ນຄໍາຮ້ອງຟ້ອງ ........ 33
ພາກທີ XI ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານພາສີ. ........ 33

ໝວດທີ 1 ການຈັດຕັ້ງພາສີ ..... 33
ມາດຕາ 70. ທີ່ຕັ້ງ ແລະ ພາລະບົດບາດ ..... 33
ມາດຕາ 71. ໂຄງປະກອບການຈັດຕັ້ງ ..... 34
ມາດຕາ 72. ສິດ ແລະ ໜ້າທີ່ຂອງລັດຖະການພາສີ ..... 34
ມາດຕາ 73. ໂຄງປະກອບບຸກຄະລາກອນ ..... 37
ມາດຕາ 74. ມາດຖານຂອງພະນັກງານພາສີ ..... 37
ມາດຕາ 75. ການຮັກສາຄວາມລັບທາງລັດຖະການ ..... 38
ໝວດທີ 2 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ພາສີ ..... 38
ມາດຕາ 76. ສິດຂອງເຈົ້າໜ້າທີ່ພາສີ ..... 38
ມາດຕາ 77 . ໜ້າທີ່ຂອງເຈົ້າໜ້າທີ່ພາສີ ..... 39
ມາດຕາ 78. ການເຄື່ອນໄຫວໃນວົງລັດສະໝີ ..... 39
ມາດຕາ 79. ການເຄື່ອນໄຫວນອກວົງລັດສະໝີ ..... 39
ມາດຕາ 80. ເຄື່ອງແບບ ແລະກາໝາຍ ..... 40
ພາກທີ XII ການຄຸ້ມຄອງ ແລະ ກວດກາວຽກງານພາສີ ..... 40
ໝວດທີ 1 ອົງການຄຸ້ມຄອງວຽກງານພາສີ ..... 40
ມາດຕາ 81. ອົງການຄຸ້ມຄອງວຽກງານພາສີ ..... 40
ມາດຕາ 82. ສິດ ແລະ ໜ້າທີ່ ຂອງ ກະຊວງການເງິນ ..... 40
ມາດຕາ 83. ສິດ ແລະ ໜ້າທີ່ຂອງ ພະແນກການເງິນຂັ້ນແຂວງ ..... 41
ມາດຕາ 84. ສິດ ແລະ ໜ້າທີ່ຂອງຫ້ອງການ ການເງິນຂັ້ນເມືອງ ..... 41
ໝວດທີ 2 ການກວດກາວຽກງານພາສີ ..... 41
ມາດຕາ 85. ອົງການກວດກາວຽກງານພາສີ ..... 41
ມາດຕາ 86. ສິດ ແລະ ໜ້າທີ່ຂອງອົງການກວດກາພາຍໃນ ..... 42
ມາດຕາ 87. ສິດ ແລະ ໜ້າທີ່ຂອງອົງການກວດກາພາຍນອກ ..... 42
ມາດຕາ 88. ຮູບການກວດກາ ..... 42
ພາກທີ XIII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ..... 43
ໝວດທີ 1 ນະໂຍບາຍຕໍ່ຜູ້ມີຜົນງານ ..... 43
ມາດຕາ 89. ການຍ້ອງຍໍ ..... 43
ມາດຕາ 90. ນະໂຍບາຍຕໍ່ຜູ້ເສຍພາສີ ແລະ ພັນທະອື່ນໆ ..... 43
ໝວດທີ 2 ມາດຕະການຕໍ່ຜູ້ລະເມີດ ..... 43
ມາດຕາ 91. ມາດຕະການຕໍ່ພະນັກງານພາສີ ..... 43
ມາດຕາ 92. ມາດຕະການຕໍ່ຜູ້ສົ່ງອອກ-ນຳເຂົ້າ ..... 44
ມາດຕາ 93. ມາດຕະການອື່ນໆ ..... 44
ພາກທີ XIV ບົດບັນຍັດສຸດທ້າຍ ..... 44
ມາດຕາ 94. ການຈັດຕັ້ງປະຕິບັດ ..... 44

ມາດຕາ 95. ຜົນສັກສິດ ........................................................................ 44

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສະພາແຫ່ງຊາດ ເລກທີ 05 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 20 ພຶດສະພາ 2005

# ກົດໝາຍ ວ່າດ້ວຍພາສີ

## ພາກທີ I ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍວ່າດ້ວຍພາສີກໍານົດຫຼັກການ, ນະໂຍບາຍ, ລະບຽບການ ແລະ ມາດຕະການ ກ່ຽວກັບການສົ່ງອອກ-ນໍາເຂົ້າ, ການຜ່ານແດນ ແລະ ການຈໍລະຈອນສິນຄ້າ, ເຄື່ອງຂອງຢູ່ພາຍໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ແນໃສ່ຊຸກຍູ້ສົ່ງເສີມ, ປົກປ້ອງການຜະລິດສິນຄ້າ ແລະດໍາເນີນທຸລະກິດຢູ່ພາຍໃນປະເທດ, ການລົງທຶນ, ການຮ່ວມມືກັບຕ່າງປະເທດ ແລະການສົ່ງອອກ, ຂະຫຍາຍກໍາລັງການຜະລິດຢ່າງມີປະສິດທິຜົນ, ຮັບປະກັນແຫຼ່ງລາຍຮັບເຂົ້າງົບປະມານແຫ່ງລັດ ແລະປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

### ມາດຕາ 2. ນິຍາມພາສີ

ພາສີ ແມ່ນພັນທະເປັນເງິນທີ່ມອບໃຫ້ລັດ ໂດຍບຸກຄົນ, ການຈັດຕັ້ງ, ນິຕິບຸກຄົນ ທີ່ດໍາເນີນການສົ່ງອອກ-ນໍາເຂົ້າ, ການຜ່ານແດນ ແລະ ການຈໍລະຈອນສິນຄ້າ, ເຄື່ອງຂອງຜ່ານດ່ານ ພາສີຊາຍແດນ ຕາມອັດຕາທີ່ໄດ້ກໍານົດໄວ້ໃນປຶ້ມສາລະບານອັດຕາພາສີ.

### ມາດຕາ 3. ນະໂຍບາຍຂອງລັດກ່ຽວກັບພາສີ

ລັດວາງນະໂຍບາຍກ່ຽວກັບພາສີ ເພື່ອຊຸກຍູ້, ສົ່ງເສີມການຜະລິດ, ການບໍລິການ, ແນໃສ່ ປະຕິບັດນະໂຍບາຍສົ່ງເສີມ, ປົກປ້ອງການຜະລິດສິນຄ້າ, ຊຸກຍູ້ການສົ່ງອອກ ເພື່ອດຶງດູດການລົງ ທຶນພາຍໃນ ແລະຕ່າງປະເທດ ທັງເປັນການປະຕິບັດພັນທະເຂົ້າ

ງົບປະມານແຫ່ງລັດຂອງບຸກຄົນ, ການຈັດຕັ້ງ ແລະນິຕິບຸກຄົນທີ່ດຳເນີນກ່ຽວກັບການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງຜ່ານດ່ານພາສີຊາຍແດນ ເພື່ອຮັບປະກັນປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວ ຢ່າງຕໍ່ເນື່ອງ ແລະເຮັດໃຫ້ການເງິນຂອງລັດມີຄວາມເຂັ້ມແຂງ.

**ມາດຕາ 4. ອະທິບາຍຄຳສັບ**

- ລັດຖະການພາສີ ແມ່ນການຈັດຕັ້ງໜຶ່ງທີ່ຂຶ້ນກັບຂະແໜງການເງິນ ມີຄວາມຮັບຜິດ ຊອບໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ, ການເກັບພາສີ ແລະພັນທະອື່ນໆ ທີ່ພົວພັນກັບການສົ່ງອອກ-ນຳເຂົ້າ, ການເຄື່ອນຍ້າຍ ແລະ ການເກັບມ້ຽນສິນຄ້າ, ເຄື່ອງຂອງ.

- ພະນັກງານພາສີ ແມ່ນລັດຖະກອນ ທີ່ຖືກບັນຈຸ ແລະໄດ້ຮັບການແຕ່ງຕັ້ງໃຫ້ເຮັດວຽກ ງານ ປະຈຳຢູ່ໃນລັດຖະການພາສີ.

- ເຈົ້າໜ້າທີ່ພາສີ ແມ່ນພະນັກງານພາສີ ທີ່ຖືກແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ ປະຈຳການຢູ່ ດ່ານພາສີຊາຍແດນ, ປ້ອມພາສີ, ໜ່ວຍພາສີເຄື່ອນທີ່ ແລະວຽກງານສະເພາະກິດໃດໜຶ່ງຂອງ ພາສີ.

- ຄ່າພັນທະອື່ນໆທີ່ໄດ້ກຳນົດໄວ້ ແມ່ນອາກອນຊົມໃຊ້ຂາເຂົ້າ, ອາກອນຕົວເລກທຸລະກິດຂາເຂົ້າ, ອາກອນກຳໄລ (ໃນກໍລະນີບຸກຄົນນຳເຂົ້າ), ຄ່າທຳນຽມລົດ, ຄົນເຂົ້າ-ອອກ, ຄ່າທຳນຽມຜ່ານແດນ ທີ່ກົດໝາຍໄດ້ກຳນົດໄວ້ ຊຶ່ງມອບໃຫ້ເຈົ້າໜ້າທີ່ພາສີເປັນ ຜູ້ເກັບຢູ່ດ່ານພາສີໃນເວລາທີ່ມີການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງ.

- ລະບຽບການແຈ້ງພາສີ ແມ່ນລະບຽບການກ່ຽວກັບການນຳເອົາສິນຄ້າ, ເຄື່ອງຂອງ ໄປແຈ້ງ ຕໍ່ເຈົ້າໜ້າທີ່ພາສີ ໂດຍເຈົ້າຂອງສິນຄ້າ, ເຄື່ອງຂອງ ຫຼືຜູ້ທີ່ໄດ້ຮັບມອບສິດ ເພື່ອດຳເນີນ ການ ຕາມຂັ້ນຕອນຂອງລະບຽບກົດໝາຍກ່ຽວກັບພາສີ.

- ຜູ້ບໍລິການແຈ້ງພາສີ ແມ່ນບຸກຄົນ ຫຼື ນິຕິບຸກຄົນທີ່ດຳເນີນທຸລະກິດ ການບໍລິການແຈ້ງພາສີ ສຳລັບສິນຄ້າ, ເຄື່ອງຂອງ ແລະທັງແມ່ນຜູ້ທີ່ຕາງໜ້າໃຫ້ແກ່ ບຸກຄົນຫຼືນິຕິບຸກຄົນອື່ນ ເພື່ອ ພົວພັນກັບເຈົ້າໜ້າທີ່ພາສີໂດຍກົງ.

- ເສັ້ນທາງສະເພາະ ແມ່ນເສັ້ນທາງບົກ, ທາງລົດໄຟ, ທາງນ້ຳ ແລະ ເສັ້ນທາງອື່ນໆ ທີ່ເຈົ້າໜ້າທີ່ພາສີ ໄດ້ກຳນົດໄວ້ ເພື່ອຈຸດປະສົງການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງພາຍໃຕ້ການ ຄວບຄຸມຂອງເຈົ້າໜ້າທີ່ພາສີ.

- ການຢຶດສິນຄ້າ, ເຄື່ອງຂອງ ແມ່ນການຮັກສາສິນຄ້າ, ເຄື່ອງຂອງໄວ້ຊົ່ວຄາວເພື່ອລໍ ຖ້າຜົນຂອງການດຳເນີນຄະດີ.

- ການອາຍັດສິນຄ້າ, ເຄື່ອງຂອງ ແມ່ນການຫ້າມຊື້-ຂາຍ, ໂອນ ຫຼື ຊວດຈຳສິນຄ້າ, ເຄື່ອງຂອງທີ່ບໍ່ສະດວກໃນການຍົກຍ້າຍໂດຍຮັກສາໄວ້ຢູ່ສະຖານທີ່ຂອງຜູ້ຖືກຫາເພື່ອລໍ ຖ້າຜົນ ຂອງການດຳເນີນຄະດີ.

- ການຮິບສິນຄ້າ, ເຄື່ອງຂອງ ແມ່ນການເອົາສິນຄ້າ, ເຄື່ອງຂອງທີ່ເປັນກຳມະສິດຂອງຜູ້ກະທຳຜິດທາງພາສີ ມາເປັນຂອງລັດ ຕາມຄຳຕັດສິນຂອງສານ.

- ການທຸ້ມຕະຫຼາດ ແມ່ນການຂາຍສິນຄ້າຫຼຸດລາຄາຕົ້ນທຶນການຜະລິດ ເພື່ອຍາດຕະຫຼາດ ທີ່ມີຜົນສະທ້ອນຕໍ່ການຜະລິດ ຫຼື ການຈໍລະຈອນສິນຄ້າປະເພດດຽວກັນພາຍໃນປະເທດ.

## ມາດຕາ 5. ອານາເຂດພາສີ

ອານາເຂດພາສີ ກວມເອົາພື້ນແຜ່ນດິນອັນຄົບຖ້ວນຂອງ ສ.ປ.ປ.ລາວ ທີ່ໄດ້ກຳນົດຂອບ ເຂດການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ພາສີ. ໃນກໍລະນີທີ່ລັດຖະບານແຫ່ງ ສ.ປ.ປ.ລາວ ໄດ້ຮ່ວມ ລົງນາມໃນສັນຍາ ຫຼື ເຂົ້າເປັນພາຄີຂອງສົນທິສັນຍາສາກົນນັ້ນ ເຈົ້າໜ້າທີ່ພາສີ ສາມາດປະຕິບັດ ໜ້າທີ່ນອກອານາເຂດພາສີໄດ້.

ຢູ່ໃນອານາເຂດພາສີ ບຸກຄົນ, ການຈັດຕັ້ງ ແລະນິຕິບຸກຄົນ ໂດຍບໍ່ຈຳແນກສັນຊາດທີ່ດຳ ເນີນກ່ຽວກັບການ ສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງຜ່ານດ່ານພາສີຊາຍແດນ ຕ້ອງປະຕິບັດລະບຽບກົດໝາຍພາສີ ແລະລະບຽບການອື່ນໆ ທີ່ກ່ຽວພັນກັບການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງ ຢ່າງເຂັ້ມງວດ.

## ມາດຕາ 6. ການປ່ຽນແປງອັດຕາພາສີໃນກໍລະນີຈຳເປັນ

ໃນກໍລະນີອັນຈຳເປັນຮີບດ່ວນ ທີ່ຕ້ອງໄດ້ປ່ຽນແປງອັດຕາພາສີ ເພື່ອປົກປັກຮັກສາຜົນປະໂຫຍດຂອງຊາດ ແລະໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມໃນແຕ່ລະໄລຍະນັ້ນ ລັດຖະບານຈະເປັນຜູ້ນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ ນຳສະເໜີປະທານປະ ເທດ ພິຈາລະນາອອກລັດຖະບັນຍັດປະກາດໃຊ້ເປັນການຊົ່ວຄາວແລ້ວ ຄະນະປະຈຳສະພາແຫ່ງຊາດ ຕ້ອງລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ຄັ້ງຖັດໄປ ເພື່ອພິຈາລະນາຮັບຮອງເອົາເປັນກົດໝາຍ.

ບໍ່ອະນຸຍາດໃຫ້ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ປ່ຽນແປງອັດຕາພາສີຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ຢ່າງເດັດຂາດ.

## ມາດຕາ 7. ສິນຄ້າທີ່ຕ້ອງເສຍພາສີ

ສິນຄ້າ, ເຄື່ອງຂອງທຸກຊະນິດທີ່ສົ່ງອອກ-ນຳເຂົ້າ ສ.ປ.ປ.ລາວ ຕ້ອງໄດ້ເສຍຄ່າພາສີ ແລະ ພັນທະອື່ນໆ ຕາມລະບຽບຫຼັກການທີ່ໄດ້ບົ່ງໄວ້ໃນປຶ້ມສາລະບານອັດຕາພາສີ ເວັ້ນເສຍແຕ່ໃນກໍລະນີທາກຖືກຈັດເຂົ້າຢູ່ໃນລະບອບງົດເກັບພາສີ ຫຼື ຍົກເວັ້ນພາສີ.

## ມາດຕາ 8. ພັນທະໃນການເສຍພາສີ

ບຸກຄົນ, ການຈັດຕັ້ງ ແລະ ນິຕິບຸກຄົນ ທີ່ດຳເນີນກ່ຽວກັບການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງຜ່ານດ່ານພາສີຊາຍແດນ ຕ້ອງປະຕິບັດພັນທະໃນການເສຍພາສີຕາມລະບຽບກົດໝາຍ.

### ມາດຕາ 9. ການພົວພັນຮ່ວມມືກັບສາກົນ

ລັດຖະບານເປີດກ້ວາງ ແລະ ສົ່ງເສີມໃຫ້ມີການພົວພັນຮ່ວມມືກັບສາກົນ ກ່ຽວກັບວຽກງານ ພາສີ ບົນພື້ນຖານການເຄົາລົບອະທິປະໄຕຊຶ່ງກັນແລະກັນ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ເພື່ອພັດທະນາຂົງເຂດວຽກງານພາສີເຊັ່ນ: ການແລກປ່ຽນບົດຮຽນ ທາງດ້ານເຕັກນິກວິຊາການ, ການພັດທະນາຊັບພະຍາກອນມະນຸດ, ການແລກປ່ຽນຂໍ້ມູນຂ່າວສານ, ການອຳນວຍຄວາມສະດວກທາງ ດ້ານການຄ້າ ແລະອື່ນໆຕາມສັນຍາ ຫຼື ສົນທິສັນຍາສາກົນ ທີ່ ສ.ປ.ປ.ລາວ ໄດ້ລົງນາມ ຫຼື ໄດ້ ເຂົ້າຮ່ວມເປັນພາຄີ.

## ພາກທີ II ການດຳເນີນການແຈ້ງພາສີ

## ໝວດທີ 1 ການຈັດລະຫັດ ແລະ ຕົ້ນກຳເນີດສິນຄ້າ, ເຄື່ອງຂອງ

### ມາດຕາ 10. ການຈັດລະຫັດສິນຄ້າ

ສິນຄ້າ, ເຄື່ອງຂອງທຸກຊະນິດ ທີ່ຈະສົ່ງອອກ-ນຳເຂົ້າ ຕ້ອງໄດ້ແຈ້ງພາສີຕາມເລກລະຫັດຂອງແຕ່ລະຊະນິດສິນຄ້າ, ເຄື່ອງຂອງ ທີ່ບົ່ງໄວ້ໃນປື້ມສາລະບານອັດຕາພາສີ.

ປື້ມສາລະບານອັດຕາພາສີຂອງ ສ.ປ.ປ.ລາວ ແມ່ນກຳນົດຂຶ້ນ ໂດຍອີງຕາມສາລະບານລະບົບເອກະພາບຂອງສາກົນ.

### ມາດຕາ 11. ຕົ້ນກຳເນີດສິນຄ້າ

ຕົ້ນກຳເນີດສິນຄ້າ ແມ່ນປະເທດທີ່ໄດ້ຂຸດຄົ້ນ, ຜະລິດ ຫຼື ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງສິນຄ້າ, ເຄື່ອງຂອງ ຕາມລະບຽບການທີ່ໄດ້ກຳນົດໄວ້ ໂດຍສອດຄ່ອງກັບລະບຽບການຂອງ ການນຳໃຊ້ສາລະບານອັດຕາພາສີ, ການກຳນົດທາງດ້ານປະລິມານຂອງສ່ວນປະກອບ ຫຼື ລະບຽບການອື່ນໆ ທາງດ້ານການຄ້າ.

ສິນຄ້າ, ເຄື່ອງຂອງ ນຳເຂົ້າ ຈະຖືກກຳນົດຕົ້ນກຳເນີດຢ່າງຖືກຕ້ອງໄດ້ ກໍຕໍ່ເມື່ອມີສິ່ງຢັ້ງຢືນຕົ້ນກຳເນີດ ແລະການຈັດສົ່ງສິນຄ້າຈາກປະເທດຕົ້ນກຳເນີດ ມາຍັງປະເທດນຳເຂົ້າຢ່າງຖືກຕ້ອງຕາມລະບຽບການ.

ລັດຖະບານ ເປັນຜູ້ອອກລະບຽບການກ່ຽວກັບຕົ້ນກຳເນີດສິນຄ້າ, ເຄື່ອງຂອງນັບທັງຕົ້ນກຳເນີດຂອງສິນຄ້າ, ເຄື່ອງຂອງ ທີ່ຜະລິດຢູ່ໃນປະເທດໃດໜຶ່ງ ຊຶ່ງໄດ້ນຳໃຊ້ວັດຖຸດິບ ຫຼື ສ່ວນປະ ກອບມາຈາກປະເທດອື່ນ.

## ໝວດທີ 2 ມູນຄ່າແຈ້ງພາສີ ສິນຄ້າ, ເຄື່ອງຂອງ

### ມາດຕາ 12. ມູນຄ່າແຈ້ງພາສີຂາອອກ

ມູນຄ່າແຈ້ງພາສີຂາອອກ ແມ່ນມູນຄ່າຕົວຈິງຂອງສິນຄ້າ, ເຄື່ອງຂອງ ທີ່ນຳສົ່ງຮອດ ດ່ານພາສີຊາຍແດນ ບ່ອນສົ່ງອອກ ໂດຍອີງໃສ່ສັນຍາຊື້-ຂາຍ.

### ມາດຕາ 13. ມູນຄ່າແຈ້ງພາສີຂາເຂົ້າ

ການກຳນົດມູນຄ່າແຈ້ງພາສີຂາເຂົ້າ ແມ່ນປະຕິບັດຕາມຫຼັກການທີ່ໄດ້ກຳນົດໄວ້ໃນຂໍ້ຕົກ ລົງທົ່ວໄປ ວ່າດ້ວຍພາສີ ແລະ ການຄ້າ 1994 ຂອງອົງການການຄ້າໂລກ.

ລັດຖະບານ ເປັນຜູ້ກຳນົດການຈັດຕັ້ງປະຕິບັດລະອຽດ.

## ໝວດທີ 3 ສິນຄ້າ, ເຄື່ອງຂອງປະເພດຈຳກັດ ແລະ ຕ້ອງຫ້າມ

### ມາດຕາ14. ສິນຄ້າ, ເຄື່ອງຂອງປະເພດຈຳກັດ

ສິນຄ້າ, ເຄື່ອງຂອງປະເພດຈຳກັດ ແມ່ນສິນຄ້າ, ເຄື່ອງຂອງ ຊຶ່ງການສົ່ງອອກ ຫຼື ນຳເຂົ້າ ຖືກຈຳກັດດ້ວຍກົດໝາຍ ຫຼື ລະບຽບການອື່ນໆຂອງລັດ ດ້ວຍເຫດຜົນດ້ານການຫຸ້ມຫໍ່, ດ້ານຄຸນນະພາບຂອງສິນຄ້າ, ເຄື່ອງຂອງທີ່ບໍ່ໄດ້ມາດຖານ ແລະ ການຫຸ້ມຕະຫລາດ.

ໃນກໍລະນີມີຄວາມຈຳເປັນ ລັດຖະບານ ຕ້ອງອອກດຳລັດ ເພື່ອຄຸ້ມຄອງຢ່າງເຂັ້ມງວດ ຕໍ່ບາງປະເພດສິນຄ້າ, ເຄື່ອງຂອງເພື່ອຫ້າມການນຳເຂົ້າ ຫຼື ສົ່ງອອກ ໃນໄລຍະເວລາໃດໜຶ່ງພາຍໃຕ້ເງື່ອນໄຂສະເພາະ.

ຖ້າຫາກມີການນຳເຂົ້າ ຫຼື ສົ່ງອອກສິນຄ້າ, ເຄື່ອງຂອງ ປະເພດຈຳກັດ ຕ້ອງມີໃບອະນຸ ຍາດຈາກຂະແໜງການທີ່ກ່ຽວຂ້ອງຂອງລັດ ຄັດຕິດໄປພ້ອມກັບການແຈ້ງພາສີ.

### ມາດຕາ 15. ສິນຄ້າ, ເຄື່ອງຂອງປະເພດຕ້ອງຫ້າມ

ສິນຄ້າ, ເຄື່ອງຂອງ ປະເພດຕ້ອງຫ້າມ ແມ່ນສິນຄ້າ, ເຄື່ອງຂອງ ທີ່ລັດບໍ່ອະນຸຍາດໃຫ້ ນຳເຂົ້າ ຫຼື ສົ່ງອອກ, ຊື້, ຂາຍ, ມີໄວ້ໃນຄອບຄອງ ຫຼື ຊົມໃຊ້ ເພື່ອຮັບປະກັນເງື່ອນໄຂດັ່ງລຸ່ມນີ້ :

1. ຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
2. ການປົກປ້ອງຊີວິດ ແລະ ສຸຂະພາບຂອງປະຊາຊົນ, ສັດ ແລະພືດພັນ;
3. ມາດຕະຖານການດຳລົງຊີວິດທີ່ດີຂອງປະຊາຊົນ, ຮີດຄອງປະເພນີ ແລະວັດທະນະທຳອັນດີງາມຂອງຊາດ;
4. ການປົກປັກຮັກສາມໍລະດົກແຫ່ງຊາດ;
5. ການປົກປັກຮັກສາຊັບພະຍາກອນທຳມະຊາດ;
6. ການປະຕິບັດພັນທະພາຍໃຕ້ກົດບັດສະຫະປະຊາຊາດ;
7. ການປະຕິບັດຂໍ້ກຳນົດຂອງກົດໝາຍທີ່ກ່ຽວຂ້ອງຂອງ ສ.ປ.ປ.ລາວ.

## ພາກທີ III ການແຈ້ງພາສີ, ການເສຍພາສີ ແລະ ພັນທະອື່ນໆ

### ໝວດທີ 1 ລະບຽບການແຈ້ງພາສີ

**ມາດຕາ 16. ການແຈ້ງພາສີໂດຍສັງເຂບ**

ຜູ້ທີ່ ສົ່ງອອກ-ນຳເຂົ້າ ສິນຄ້າ, ເຄື່ອງຂອງ ຜ່ານດ່ານພາສີ ຕ້ອງປະຕິບັດຕາມລະບຽບ ດັ່ງນີ້:

1. ທຸກສິນຄ້າ, ເຄື່ອງຂອງ ທີ່ຈະສົ່ງອອກ ຫຼື ນຳເຂົ້າ ໂດຍທາງບົກ, ທາງນ້ຳ ຫຼື ທາງ ອາກາດ ຕ້ອງນຳໄປຕາມເສັ້ນທາງ ທີ່ທາງການໄດ້ກຳນົດໄວ້ ແລະ ນຳໄປແຈ້ງດ່ານພາສີ, ປ້ອມພາສີ ຫຼື ຫ້ອງການພາສີ ບ່ອນທີ່ໃກ້ສຸດ; ຫ້າມນຳໃຊ້ເສັ້ນທາງອື່ນ, ນຳ ເຂົ້າເຄຫະສະຖານໃດໜຶ່ງ ຫຼື ແລ່ນກາຍດ່ານພາສີ ໂດຍບໍ່ໄດ້ຮັບອະນຸຍາດ, ຖ້າມີ ການລະເມີດ ຈະຖືວ່າເປັນການຫຼົບຫຼີກພາສີ ໂດຍເຈດຕະນາ;
2. ຫ້າມບຸກຄົນໃດບຸກຄົນໜຶ່ງເອົາສິນຄ້າ, ເຄື່ອງຂອງ ລົງຈາກພາຫະນະຂົນສົ່ງ ທີ່ມາ ຮອດດ່ານພາສີຊາຍແດນ ຈົນກວ່າສິນຄ້າ, ເຄື່ອງຂອງ ຫຼື ເອກະສານຂົນສົ່ງນັ້ນ ຈະຖືກແຈ້ງເປັນການຊົ່ວຄາວຕໍ່ເຈົ້າໜ້າທີ່ພາສີ ເພື່ອບັນທຶກເຂົ້າສາງ ຫຼື ແຈ້ງພາສີເປັນ ລາຍລະອຽດເສຍກ່ອນ ຕາມທີ່ໄດ້ກຳນົດໃນມາດຕາ 17 ຂອງກົດໝາຍສະບັບນີ້ ເວັ້ນ ເສຍແຕ່ໃນກໍລະນີສຸກເສີນ ທີ່ຈະຕ້ອງຮັກສາຄວາມປອດໄພສຳລັບບຸກຄົນ ຫຼື ຊັບສິນ ທີ່ຢູ່ໃນພາຫະນະຂົນສົ່ງ, ບຸກຄົນອື່ນໆ, ສິນຄ້າ, ເຄື່ອງຂອງ, ພາຫະນະຂົນສົ່ງ ທີ່ມີຄວາມສ່ຽງ ຕໍ່ການເກີດອຸບັດຕິເຫດ, ອັກຄີໄພ, ໄພທຳມະຊາດ ຫຼື ສະພາບອັນຕະລາຍອື່ນໆ ທີ່ບໍ່ສາມາດກຳນົດລ່ວງໜ້າໄດ້;
3. ສິນຄ້າ, ເຄື່ອງຂອງ ແລະ ພາຫະນະຂົນສົ່ງ ທີ່ຜ່ານດ່ານຕ້ອງໄດ້ແຈ້ງພາສີ :
    ກ. ເຄື່ອງຕິດຕົວ ຫຼື ສິນຄ້າ, ເຄື່ອງຂອງຜູ້ໂດຍສານ ທີ່ເດີນທາງຜ່ານດ່ານພາສີ ຊາຍແດນ;
    ຂ. ສິນຄ້າ, ເຄື່ອງຂອງ ທີ່ສົ່ງອອກ ຫຼື ນຳເຂົ້າຜ່ານທາງໄປສະນີ;
    ຄ. ພາຫະນະສ່ວນຕົວ, ພາຫະນະຂົນສົ່ງ ທີ່ເດີນທາງຜ່ານດ່ານພາສີຊາຍແດນ;
    ງ. ການສົ່ງອອກ ຫຼື ນຳເຂົ້າສິນຄ້າ, ເຄື່ອງຂອງ ໃນນາມຕົນເອງ.
4. ບຸກຄົນ, ການຈັດຕັ້ງ ແລະນິຕິບຸກຄົນທີ່ມີສິນຄ້າ, ເຄື່ອງຂອງ ຕ້ອງ :
    ກ. ແຈ້ງຕໍ່ເຈົ້າໜ້າທີ່ພາສີ ກ່ຽວກັບສິນຄ້າ, ເຄື່ອງຂອງ ນັ້ນຕາມຄວາມເປັນຈິງ;
    ຂ. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກຕາມລະບຽບຫຼັກການ ໃນກໍລະນີທີ່ເຈົ້າໜ້າທີ່ພາສີຕ້ອງການຂໍ້ມູນ ໃນການກວດກາສິນຄ້າ, ເຄື່ອງຂອງ;

5. ກະຊວງການເງິນເປັນຜູ້ອອກລະບຽບການ ກ່ຽວກັບການກຳນົດເວລາ, ວິທີການ, ຄວາມຕ້ອງການທາງດ້ານເອກະສານ ຫຼື ຂໍ້ຍົກເວັ້ນຕ່າງໆ ກ່ຽວກັບການແຈ້ງສິນຄ້າ, ເຄື່ອງຂອງ ທີ່ຈະສົ່ງອອກ ແລະ ນຳເຂົ້າ.

## ມາດຕາ 17. ການແຈ້ງພາສີເປັນລາຍລະອຽດ

ທຸກສິນຄ້າ, ເຄື່ອງຂອງ ທີ່ສົ່ງອອກ ຫຼື ນຳເຂົ້າປະເທດ ເຖິງວ່າຈະໄດ້ຮັບອະນຸຍາດງົດເກັບ, ຫຼຸດຜ່ອນ ຫຼື ຍົກເວັ້ນ ການເສຍພາສີ ແລະ ພັນທະອື່ນໆ ຫຼືບໍ່ກໍຕາມ ຕ້ອງໄດ້ແຈ້ງພາສີເປັນລາຍລະອຽດ ໂດຍເຈົ້າຂອງສິນຄ້າ, ເຄື່ອງຂອງ ຫຼື ຜູ້ຕາງໜ້າ ທີ່ໄດ້ຮັບມອບໝາຍ ເປັນລາຍລັກອັກ ສອນ ຫຼື ໂດຍຜູ້ບໍລິການແຈ້ງພາສີ ຕໍ່ເຈົ້າໜ້າທີ່ພາສີ. ການແຈ້ງພາສີເປັນລາຍລະອຽດ ຕ້ອງແຈ້ງ ທຸກຂໍ້ມູນໃຫ້ຄົບຖ້ວນຕາມແຕ່ລະບອບພາສີທີ່ໄດ້ກຳນົດໄວ້.

ຖ້າຜູ້ແຈ້ງພາສີຫາກບໍ່ຮູ້ຂໍ້ມູນລັກແນ່ກ່ຽວກັບສິນຄ້າ, ເຄື່ອງຂອງ ຂອງຕົນເພື່ອປະກອບໃບ ແຈ້ງພາສີເປັນລາຍລະອຽດນັ້ນ ຜູ້ແຈ້ງພາສີຈະໄດ້ຮັບອະນຸຍາດໃຫ້ໄປກວດເບິ່ງສິນຄ້າ,ເຄື່ອງຂອງ ຂອງຕົນເສຍກ່ອນ ຢູ່ສາງສິນຄ້າ, ເຄື່ອງຂອງ.

## ມາດຕາ 18. ການປະກອບເອກະສານແຈ້ງພາສີ

ການປະກອບເອກະສານແຈ້ງພາສີເປັນລາຍລະອຽດ ຕ້ອງປະຕິບັດຕາມລະບຽບການ ດັ່ງ ລຸ່ມນີ້ :

1. ໃບແຈ້ງພາສີເປັນລາຍລະອຽດຕ້ອງມີລາຍເຊັນ ຂອງຜູ້ເປັນເຈົ້າຂອງສິນຄ້າ, ເຄື່ອງຂອງ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບສິດຢ່າງເປັນລາຍລັກອັກສອນ ແລະ ຕ້ອງຮັບຜິດຊອບຕໍ່ ທຸກໆຂໍ້ຄວາມ ທີ່ໄດ້ແຈ້ງໄວ້ຢູ່ໃນໃບແຈ້ງພາສີເປັນລາຍລະອຽດ;
2. ເອກະສານ ກ່ຽວກັບສິນຄ້າ, ເຄື່ອງຂອງ ຊຶ່ງຈະຕ້ອງຍື່ນພ້ອມໃບແຈ້ງພາສີເປັນລາຍ ລະອຽດ ຕ້ອງປະກອບດ້ວຍ: ໃບຂົນສົ່ງສິນຄ້າ, ໃບແຈ້ງລາຄາ, ໃບອະນຸຍາດ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ ຊຶ່ງເປັນສະບັບເດີມເພື່ອການຢັ້ງຢືນຄວາມຖືກຕ້ອງ;
3. ກະຊວງການເງິນ ເປັນຜູ້ກຳນົດລະບຽບຫຼັກການ ແລະ ຂັ້ນຕອນ ກ່ຽວກັບການແຈ້ງພາສີເປັນລາຍລະອຽດ.

## ມາດຕາ 19. ກຳນົດເວລາໃນການແຈ້ງພາສີ

ໃບແຈ້ງພາສີເປັນລາຍລະອຽດຕ້ອງມອບໃຫ້ດ່ານພາສີ ພາຍໃນກຳນົດສາມສິບວັນ ນັບແຕ່ວັນທີ່ໄດ້ຈົດສິນຄ້າ, ເຄື່ອງຂອງ ເຂົ້າສາງເປັນຕົ້ນໄປ ໂດຍບໍ່ນັບວັນພັກທາງລັດຖະການ, ຖ້າຫາກກາຍກຳນົດວັນດັ່ງກ່າວສິນຄ້າ, ເຄື່ອງຂອງ ຈະຕ້ອງຕົກຢູ່ໃນການຄວບຄຸມສະເພາະຂອງລັດ ຖະການພາສີ.

### ມາດຕາ 20. ຜູ້ບໍລິການແຈ້ງພາສີ

ຜູ້ບໍລິການແຈ້ງພາສີ ມີໜ້າທີ່ບໍລິການແຈ້ງພາສີ ແທນເຈົ້າຂອງສິນຄ້າ, ເຄື່ອງຂອງ ຫຼື ແທນຜູ້ເຮັດການຂົນສົ່ງ.

ກະຊວງການເງິນ ເປັນຜູ້ອອກລະບຽບການກ່ຽວກັບມາດຖານ, ເງື່ອນໄຂ ແລະ ຂອບເຂດ ການເຄື່ອນໄຫວຂອງຜູ້ບໍລິການແຈ້ງພາສີ.

### ມາດຕາ 21. ການບັນທຶກໃບແຈ້ງພາສີເປັນລາຍລະອຽດ

ໃບແຈ້ງພາສີເປັນລາຍລະອຽດ ແມ່ນປະກອບຂຶ້ນໂດຍຜູ້ແຈ້ງພາສີ ກ່ອນຈະນຳສະເໜີ ຕໍ່ເຈົ້າໜ້າທີ່ພາສີ, ຜູ້ແຈ້ງພາສີຕ້ອງໄດ້ກວດກາທຸກໆເນື້ອໃນຂໍ້ມູນທີ່ແຈ້ງໄວ້ໃນໃບແຈ້ງພາສີ ນັ້ນໃຫ້ລະອຽດ. ໃບແຈ້ງພາສີເປັນລາຍລະອຽດທີ່ມີຮອຍລຶບ, ມີຮອຍຂີດຂ້າ, ມີຮອຍເປື້ອນ ຖື ວ່າໃຊ້ການບໍ່ໄດ້. ໃບແຈ້ງພາສີເປັນລາຍລະອຽດ ທີ່ໄດ້ບັນທຶກໄວ້ ແລະຮັບຮອງເອົາ ເພື່ອຊຳລະຄ່າພາສີ ແລະພັນທະອື່ນໆ ຫຼື ຫຼັງຈາກການກວດກາໄດ້ເລີ່ມຂຶ້ນແລ້ວ ບໍ່ສາມາດປ່ຽນແປງຂໍ້ມູນ ໄດ້.

## ໝວດທີ 2 ການເສຍພາສີ ແລະ ພັນທະອື່ນໆ

### ມາດຕາ 22. ການຄິດໄລ່ຄ່າພາສີ ແລະ ພັນທະອື່ນໆ

ຄ່າພາສີ ແລະ ພັນທະອື່ນໆ ຕ້ອງຄິດໄລ່ບົນພື້ນຖານມູນຄ່າແຈ້ງພາສີເປັນເງິນກີບ ໂດຍ ອີງຕາມອັດຕາຂາຍເງິນຕາຕ່າງປະເທດຂອງທະນາຄານ ທີ່ນຳໃຊ້ໃນວັນບັນທຶກໃບແຈ້ງພາສີ ເປັນລາຍລະອຽດ ແລະ ຕາມອັດຕາ ທີ່ໄດ້ກຳນົດໄວ້ໃນປື້ມສາລະບານອັດຕາພາສີ.

### ມາດຕາ 23. ວິທີເສຍພາສີ ແລະ ພັນທະອື່ນໆ

ຄ່າພາສີ ແລະພັນທະອື່ນໆ ພາຍຫຼັງທີ່ໄດ້ບັນທຶກໃບແຈ້ງພາສີເປັນລາຍລະອຽດຕ້ອງຊຳ ລະໃຫ້ຄົບຖ້ວນເປັນເງິນກີບ, ຜູ້ຮັບເງິນຄ່າພາສີ ແລະພັນທະອື່ນໆ ຕ້ອງອອກໃບຮັບເງິນໃຫ້ຜູ້ມາ ຊຳລະທຸກໆຄັ້ງ.

ລັດຖະບານ ເປັນຜູ້ກຳນົດຄ່າປັບໃໝ ຕໍ່ຜູ້ທີ່ບໍ່ມາຊຳລະຄ່າພາສີ ແລະພັນທະອື່ນໆ ຫຼື ມາຊຳລະຊັກຊ້າ.

## ໝວດທີ 3 ການນຳເອົາສິນຄ້າ, ເຄື່ອງຂອງ ອອກຈາກສາງ ຫຼື ດ່ານພາສີ

### ມາດຕາ 24. ການກວດກາສິນຄ້າ, ເຄື່ອງຂອງ ໂດຍເຈົ້າໜ້າທີ່ພາສີ

ເມື່ອບັນທຶກໃບແຈ້ງພາສີເປັນລາຍລະອຽດແລ້ວ ສິນຄ້າ, ເຄື່ອງຂອງ ທັງໝົດ ຫຼື ບາງສ່ວນ ຕ້ອງຢູ່ພາຍໃຕ້ການກວດກາຂອງເຈົ້າໜ້າທີ່ພາສີ ແລ້ວແຕ່ເຫັນສົມຄວນ.

ການກວດກາສິນຄ້າ, ເຄື່ອງຂອງ ຕ້ອງດຳເນີນຊ້ອງໜ້າເຈົ້າຂອງສິນຄ້າ, ເຄື່ອງຂອງ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບສິດ.

ໃນກໍລະນີທີ່ຈຳເປັນ ການກວດກາຕ້ອງມີການໄຂຕູ້ສິນຄ້າ, ຫີບຫໍ່, ນັບຈຳນວນສິນຄ້າ, ເຄື່ອງຂອງ, ຕິດຊັ່ງນໍ້າໜັກ, ວັດແທກ, ພິສູດ, ກວດກາຕາມຂໍ້ມູນຕ່າງໆ ຫຼື ນຳໃຊ້ເຕັກນິກການ ກວດກາອື່ນໆ.

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບຜົນຂອງການກວດສິນຄ້າ, ເຄື່ອງຂອງນັ້ນ ຜູ້ແຈ້ງພາສີຈະ ຮ້ອງຂໍໃຫ້ເຈົ້າໜ້າທີ່ພາສີ ທຳການກວດສິນຄ້າ, ເຄື່ອງຂອງຄືນໃໝ່ກໍໄດ້.

ການກວດສິນຄ້າ, ເຄື່ອງຂອງຢູ່ດ່ານພາສີ ຕ້ອງດຳເນີນຢູ່ສະຖານທີ່ ຊຶ່ງທາງການພາສີ ໄດ້ ກຳນົດໃຫ້.

ພາຍຫຼັງທີ່ໄດ້ກວດກາສິນຄ້າ, ເຄື່ອງຂອງແລ້ວ ເຈົ້າໜ້າທີ່ພາສີ ຕ້ອງເຮັດບັນທຶກຜົນການ ກວດກາ ພ້ອມທັງລົງລາຍເຊັນ ແລະ ຊື່ແຈ້ງຂອງຕົນ.

ຄ່າຂົນສົ່ງ, ຄ່າຍົກຖ່າຍ ແລະ ຄ່າອື່ນໆທີ່ຈຳເປັນ ແລະຖືກຕ້ອງຕາມລະບຽບກົດໝາຍ ໃນ ການກວດສິນຄ້າ, ເຄື່ອງຂອງນັ້ນ ແມ່ນຕົກເປັນພາລະຂອງເຈົ້າຂອງສິນຄ້າ, ເຄື່ອງຂອງ.

### ມາດຕາ 25. ການນຳເອົາສິນຄ້າ, ເຄື່ອງຂອງອອກຈາກສາງ ຫຼື ດ່ານພາສີ

ການນຳເອົາສິນຄ້າ, ເຄື່ອງຂອງອອກຈາກສາງ ຫຼື ດ່ານພາສີ ຕ້ອງປະຕິບັດຕາມເງື່ອນ ໄຂດັ່ງນີ້ :

1. ສິນຄ້າ, ເຄື່ອງຂອງ ຈະຖືກນຳອອກຈາກສາງ ຫຼື ດ່ານພາສີໄດ້ ກໍຕໍ່ເມື່ອຜູ້ແຈ້ງພາສີໄດ້ຊຳລະຄ່າພາສີ ແລະພັນທະອື່ນໆຄົບຖ້ວນ ແລະພາຍຫຼັງທີ່ເຈົ້າໜ້າທີ່ພາສີ ໄດ້ທຳການກວດກາຢັ້ງຢືນຄວາມຖືກຕ້ອງແລ້ວເທົ່ານັ້ນ;
2. ໃນກໍລະນີທີ່ຈຳເປັນ ເຈົ້າໜ້າທີ່ພາສີ ຈະອານຸຍາດໃຫ້ສິນຄ້າ, ເຄື່ອງຂອງ ບາງຊະນິດທີ່ຖືກກວດກາແລ້ວ ອອກຈາກສາງ ຫຼື ດ່ານພາສີກ່ອນການເສຍພາສີ ແລະ ພັນທະອື່ນໆກໍໄດ້ ແຕ່ຕ້ອງມີສັນຍາຄໍ້າປະກັນກ່ຽວກັບການຊຳລະຄ່າພາສີ ແລະພັນທະອື່ນໆດ້ວຍເງິນສົດ, ແຊັກ, ໃບຄໍ້າປະກັນຈາກທະນະຄານ, ນິຕິບຸກຄົນ ຫຼື ບຸກຄົນທີ່ເຊື່ອຖື ໄດ້ໃນມູນຄ່າທີ່ເທົ່າກັບ ຮ້ອຍຊາວສ່ວນຮ້ອຍຂອງຄ່າພາສີ ແລະພັນທະອື່ນໆທີ່ຕ້ອງ ຊຳລະຕາມວັນເວລາທີ່ເຈົ້າໜ້າທີ່ພາສີໄດ້ກຳນົດໃຫ້ ແຕ່ຢ່າງຊ້າບໍ່ໃຫ້ກາຍເຈັດວັນ. ຖ້າກາຍກຳນົດດັ່ງກ່າວ ເຈົ້າໜ້າທີ່ພາສີຈະຄິດໄລ່ຄ່າປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຂອງກົດໝາຍສະບັບນີ້;
3. ສິນຄ້າ, ເຄື່ອງຂອງທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນຍ້າຍ ເຊິ່ງໄດ້ບົ່ງໄວ້ໃນຂໍ້ທີ 1 ແລະ 2 ເທິງນີ້ ຕ້ອງນຳອອກຈາກສາງ ຫຼື ດ່ານທັນທີ.

## ໝວດທີ 4 ການຄຸ້ມຄອງເອກະສານກ່ຽວກັບພາສີ

### ມາດຕາ 26. ລະບຽບການຄຸ້ມຄອງເອກະສານ

ຜູ້ດຳເນີນທຸລະກິດ ກ່ຽວກັບການສົ່ງອອກ-ນຳເຂົ້າ ແລະຜ່ານແດນ ຕ້ອງຄຸ້ມຄອງເອກະ ສານທີ່ກ່ຽວພັນກັບພາສີດັ່ງນີ້ :

1. ຕ້ອງເກັບຮັກສາປື້ມບັນຊີ, ໃບແຈ້ງພາສີ ພ້ອມເອກະສານປະກອບ ແລະ ຂໍ້ມູນອື່ນໆ ລວມທັງຂໍ້ມູນກ່ຽວກັບພາສີດັ່ງກ່າວ ທີ່ເກັບໄວ້ໃນຮູບແບບເອເລັກໂຕຣນິກຕ່າງໆ;
2. ເອກະສານຕ່າງໆທີ່ໄດ້ກຳນົດໄວ້ໃນຂໍ້ທີ 1 ຂອງມາດຕານີ້ ຕ້ອງເກັບຮັກສາໄວ້ພາຍໃນກຳນົດສິບປີ ຢູ່ສະຖານທີ່ດຳເນີນທຸລະກິດໃນ ສ.ປ.ປ.ລາວ;
3. ຖ້າມີການສະເໜີຂອງເຈົ້າໜ້າທີ່ພາສີ ບຸກຄົນທີ່ໄດ້ກ່າວມາໃນວັກທີໜຶ່ງ ຂອງມາດຕາ ນີ້ ຕ້ອງສະແດງເອກະສານ, ປື້ມບັນທຶກ, ສຳນວນເອກະສານ ແລະ ຂໍ້ມູນອື່ນໆກ່ຽວກັບການສົ່ງອອກ ແລະ ນຳເຂົ້າສິນຄ້າ, ເຄື່ອງຂອງ ໃຫ້ແກ່ເຈົ້າໜ້າທີ່ພາສີ ເພື່ອກວດກາ;
4. ໃນກໍລະນີທີ່ບຸກຄົນຊຶ່ງໄດ້ກ່າວມາໃນວັກທີໜຶ່ງຂອງມາດຕານີ້ຫາກບໍ່ຢູ່ປະຈຳຜູ້ຕາງ ໜ້າຂອງຜູ້ກ່ຽວ ມີໜ້າທີ່ສະແດງເອກະສານຕ່າງໆກ່ຽວກັບພາສີ ເພື່ອໃຫ້ເຈົ້າໜ້າທີ່ ພາສີກວດກາ.

### ມາດຕາ 27. ການຄຸ້ມຄອງເອກະສານໄວ້ຊົ່ວຄາວ

ໃນໄລຍະທຳການສືບສວນ-ສອບສວນ ເຈົ້າໜ້າທີ່ພາສີ ມີສິດຄຸ້ມຄອງເອກະສານທີ່ຈຳ ເປັນຂອງຜູ້ສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງ ໄວ້ຊົ່ວຄາວເຊັ່ນ: ເອກະສານຄົບຊຸດທີ່ພົວພັນເຖິງ ການແຈ້ງພາສີເປັນລາຍລະອຽດ, ປື້ມບັນຊີ ແລະເອກະສານອື່ນໆ ທີ່ກ່ຽວຂ້ອງເຖິງການສົ່ງອອກ-ນຳ ເຂົ້າສິນຄ້າ, ເຄື່ອງຂອງ.

## ໝວດທີ 5 ການກວດກາ ແລະ ການສະເໜີຄືນກ່ຽວກັບການແຈ້ງພາສີ

### ມາດຕາ 28. ການກວດຄືນການແຈ້ງເສຍພາສີ

ໃບແຈ້ງພາສີເປັນລາຍລະອຽດ ຈະຢູ່ພາຍໃຕ້ການກວດກາຄືນຂອງລັດຖະການພາສີ ພາຍໃນກຳນົດສາມປີ ນັບແຕ່ວັນບັນທຶກໃບແຈ້ງພາສີເປັນລາຍລະອຽດເປັນຕົ້ນໄປ ເຊັ່ນ : ຕົ້ນກຳເນີດ ສິນຄ້າ, ເຄື່ອງຂອງ, ລະຫັດສິນຄ້າ, ມູນຄ່າແຈ້ງພາສີ, ອັດຕາພາສີ ແລະ ຂໍ້ມູນອື່ນໆ.

ໃນໄລຍະການກວດກາຄືນໃໝ່ ຫາກພົບເຫັນວ່າບັນດາຂໍ້ມູນຂ້າງເທິງນັ້ນບໍ່ຖືກຕ້ອງ ຊຶ່ງມີຜົນສະທ້ອນຕໍ່ຄ່າພາສີ ແລະພັນທະອື່ນໆ ລັດຖະການພາສີຕ້ອງອອກແຈ້ງການກ່ຽວກັບຜົນການກວດກາຄືນໃໝ່ນັ້ນ ໃຫ້ຜູ້ສົ່ງອອກ-ນຳເຂົ້າ ຫຼື ຕົວແທນ ເພື່ອຮຽກໃຫ້ມາຊຳລະຄ່າພາສີ ແລະ ພັນທະອື່ນໆເພີ້ມເຕີມ ພ້ອມທັງຄ່າປັບໃໝ ໃນຖານມີຄວາມຮັບຜິດຊອບຕໍ່ຄວາມຜິດ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 1, ພາກທີ IX ຂອງກົດໝາຍສະບັບນີ້.

ໃບແຈ້ງພາສີເປັນລາຍລະອຽດຕາມແຕ່ລະລະບອບພາສີ ຈະຕ້ອງຖືກກວດກາຄືນໃຫ້ທັນ ເວລານັບແຕ່ວັນສິນຄ້າ, ເຄື່ອງຂອງໄດ້ອອກຈາກສາງ ຫຼື ດ່ານພາສີເປັນຕົ້ນໄປ.

### ມາດຕາ 29 ການສະເໜີຄືນກ່ຽວກັບການແຈ້ງພາສີ

ຜູ້ແຈ້ງພາສີມີສິດສະເໜີຄືນກ່ຽວກັບການແຈ້ງພາສີ ຕາມຂັ້ນຕອນດັ່ງນີ້ :

1. ຜູ້ແຈ້ງພາສີ ມີສິດສະເໜີຄືນຕໍ່ລັດຖະການພາສີ ໃນກໍລະນີທີ່ມີຄວາມສົງໃສ ຫຼື ບໍ່ ເຫັນດີນຳການຕົກລົງ ຫຼື ຜົນການກວດກາຄືນຂອງລັດຖະການພາສີ ທີ່ມີຜົນກະທົບຕໍ່ ການຊຳລະຄ່າພາສີ ແລະພັນທະອື່ນໆຂອງຕົນ ໂດຍຂຽນເປັນລາຍລັກອັກສອນ ຍື່ນຕໍ່ລັດຖະການພາສີ ຢ່າງຊ້າບໍ່ໃຫ້ເກີນສາມສິບວັນ ນັບແຕ່ວັນທີ່ມີການບັນທຶກໃບ ແຈ້ງ ພາສີເປັນລາຍລະອຽດ ຫຼືວັນທີ່ໄດ້ຮັບຊາບຄຳຕົກລົງຂອງລັດຖະການພາສີນັ້ນ ເປັນ ຕົ້ນໄປ;
2. ລັດຖະການພາສີ ຕ້ອງພິຈາລະນາ ແລະ ໃຫ້ຄຳຕອບຕໍ່ການສະເໜີທີ່ກຳນົດໄວ້ໃນຂໍ້ 1 ເທິງນີ້ ຢ່າງຊ້າບໍ່ໃຫ້ເກີນສາມສິບວັນ ນັບແຕ່ວັນທີ່ໄດ້ຮັບຄຳສະເໜີນັ້ນເປັນຕົ້ນໄປ, ຖ້າບໍ່ຕອບຈະຖືວ່າການສະເໜີເປັນທີ່ຍອມຮັບ; ໃນກໍລະນີທີ່ມີຄຳຕອບຂອງລັດຖະການພາສີ ຕ້ອງອະທິບາຍ, ຊີ້ແຈງເຫດຜົນ ແລະໃຫ້ຄຳແນະນຳທີ່ຈຳເປັນ;
3. ຜູ້ແຈ້ງພາສີ ມີສິດສະເໜີໃຫ້ຂັ້ນເທິງຖັດນັ້ນ ພິຈາລະນາ ຖ້າຫາກບໍ່ເຫັນດີນຳການແກ້ໄຂຂອງລັດຖະການພາສີ. ໃນກໍລະນີທີ່ຂັ້ນເທິງບໍ່ແກ້ໄຂ ຫຼືຜູ້ແຈ້ງພາສີເຫັນວ່າການ ແກ້ໄຂນັ້ນ ບໍ່ເໝາະສົມ ກໍມີສິດຮ້ອງຟ້ອງຕໍ່ສານ.

## ພາກທີ IV ການເຄື່ອຍຍ້າຍສິນຄ້າ, ເຄື່ອງຂອງ ໂດຍມີການຄ້ຳປະກັນ ແລະ ລະບອບສາງ

## ໝວດທີ 1 ລະບຽບການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງໂດຍມີການຄ້ຳປະກັນ

### ມາດຕາ 30. ການຄຸ້ມຄອງການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ

ການຂົນສົ່ງສິນຄ້າ, ເຄື່ອງຂອງ ທີ່ຢູ່ໃນການຄວບຄຸມຂອງລັດຖະການພາສີ ໂດຍທາງບົກ, ທາງນ້ຳ ແລະ ທາງອາກາດ ແຕ່ບ່ອນໜຶ່ງໄປຫາອີກບ່ອນໜຶ່ງ ໃນອານາເຂດພາສີ ຕ້ອງມີໃບເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ຕິດຕາມໄປນຳ ຊຶ່ງອອກໃຫ້ໂດຍເຈົ້າໜ້າທີ່ພາສີຕົ້ນທາງ.

ສິນຄ້າ, ເຄື່ອງຂອງ ທີ່ເຄື່ອນຍ້າຍດ້ວຍການຄ້ຳປະກັນຕໍ່ກັບສິນຄ້າ, ເຄື່ອງຂອງທີ່ຍັງບໍ່ ທັນໄດ້ເສຍພາສີ ແລະພັນທະອື່ນໆ ຕ້ອງປະຕິບັດຕາມລະບຽບການທີ່ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້.

ຜູ້ນຳເຂົ້າ ຫຼື ຜູ້ຂົນສົ່ງສິນຄ້າ, ເຄື່ອງຂອງ ຕ້ອງປະຕິບັດທຸກຂໍ້ຄວາມ ທີ່ໄດ້ກຳນົດໄວ້ ຢູ່ໃນໃບເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ຄ້ຳປະກັນຢ່າງເຂັ້ມງວດ. ສ່ວນການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງປະເພດຈຳກັດ ຕ້ອງມີໃບອະນຸຍາດຂອງອົງການທີ່ກ່ຽວຂ້ອງ ກຳກັບໄປນຳ ແລະແຈ້ງຕໍ່ ເຈົ້າໜ້າທີ່ພາສີຕາມເສັ້ນທາງທີ່ຕົນຜ່ານ.

### ມາດຕາ 31. ການສິ້ນສຸດການຄ້ຳປະກັນ

ເມື່ອການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງຄ້ຳປະກັນ ຫາກສົ່ງຮອດຈຸດທີ່ໝາຍ ແລະຖືກ ຕ້ອງຕາມເງື່ອນທີ່ໄດ້ກຳນົດໄວ້ໃນໃບເຄື່ອນຍ້າຍຄ້ຳປະກັນແລ້ວ, ຜູ້ຂົນສົ່ງຕ້ອງ ນຳເອົາໃບເຄື່ອນຍ້າຍ ພ້ອມດ້ວຍສິນຄ້າ, ເຄື່ອງຂອງ ຄ້ຳປະກັນນັ້ນ ໄປແຈ້ງຕໍ່ຫ້ອງການ ພາສີປາຍທາງໃນທັນໃດ ເພື່ອແຈ້ງພາສີເປັນລາຍລະອຽດ ຕາມລະບອບພາສີຢ່າງຖືກ ຕ້ອງ.

ການກວດສິນຄ້າ, ເຄື່ອງຂອງນັ້ນ ຕ້ອງດຳເນີນໄປຕາມລະບຽບກົດໝາຍ ຢູ່ປາຍ ທາງ ຖ້າວ່າຄ່າພາສີ ແລະ ພັນທະອື່ນໆທີ່ຕ້ອງຈ່າຍ ຫາກຍັງບໍ່ທັນໄດ້ຈ່າຍຢູ່ຫ້ອງການ ພາສີຕົ້ນທາງ. ຫ້ອງການພາສີປາຍທາງ ຕ້ອງເກັບພາສີ ແລະ ພັນທະອື່ນໆໃຫ້ຄົບຖ້ວນ ກ່ອນທີ່ຈະປ່ອຍສິນຄ້າ, ເຄື່ອງຂອງ ເພື່ອນຳເຂົ້າມາຊົມໃຊ້ຢູ່ພາຍໃນປະເທດ ເວັ້ນເສຍແຕ່ ສິນຄ້າ, ເຄື່ອງຂອງນັ້ນ ຫາກ ຖືກຈັດເຂົ້າຢູ່ໃນລະບອບພາສີອື່ນ.

ເມື່ອເຈົ້າໜ້າທີ່ພາສີປາຍທາງຢັ້ງຢືນວ່າ ຂໍ້ມູນທີ່ເຈົ້າໜ້າທີ່ພາສີຕົ້ນທາງກຳນົດໄວ້ ນັ້ນ ຖືກ ຕ້ອງ ແລະ ຄົບຖ້ວນແລ້ວ ສັນຍາທີ່ເຮັດໄວ້ໃນໃບເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ຄ້ຳປະກັນນັ້ນ ກໍ ຈະສິ້ນສຸດລົງ, ໃນກໍລະນີທີ່ມີການຄ້ຳປະກັນດ້ວຍເງິນ ເງິນຄ້ຳປະກັນ ກໍຈະຕ້ອງສົ່ງຄືນແກ່ເຈົ້າຂອງ.

ຖ້າເຈົ້າຂອງສິນຄ້າ, ເຄື່ອງຂອງ ຫຼື ຕົວແທນຫາກລະເມີດສັນຍາໂດຍບໍ່ມີເຫດຜົນ ຢັ້ງຢືນ ພຽງພໍ ກໍຈະຖືກດຳເນີນຄະດີຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

## ໝວດທີ 2 ລະບຽບການຂົນສົ່ງສິນຄ້າ, ເຄື່ອງຂອງຜ່ານແດນ

### ມາດຕາ 32. ການຂົນສົ່ງສິນຄ້າ, ເຄື່ອງຂອງຜ່ານດິນແດນຕ່າງປະເທດ

ໃນກໍລະນີທີ່ຈຳເປັນສິນຄ້າ, ເຄື່ອງຂອງ ທີ່ຜະລິດໄດ້ຢູ່ພາຍໃນປະເທດ ແລະສິນ ຄ້າ, ເຄື່ອງຂອງ ຊຶ່ງໄດ້ເສຍຄ່າພາສີ ແລະພັນທະອື່ນໆ ຕາມລະບຽບຫຼັກການແລ້ວ ອາດຈະເຄື່ອນຍ້າຍ ຈາກຈຸດໜຶ່ງໄປຫາຈຸດໜຶ່ງຂອງ ສ.ປ.ປ.ລາວ ໂດຍອາໃສດິນແດນ ຂອງຕ່າງປະເທດກໍໄດ້. ສິນຄ້າ, ເຄື່ອງຂອງດັ່ງກ່າວນັ້ນ ຈະໄດ້ຮັບການຍົກເວັ້ນຄ່າພາ ສີຂາອອກ ພ້ອມທັງຍົກເວັ້ນລະ ບຽບການຫ້າມອອກ ແລະ ຫ້າມເຂົ້າອີກດ້ວຍ.

ການຂົນສົ່ງສິນຄ້າ, ເຄື່ອງຂອງດັ່ງກ່າວຕ້ອງມີໃບຂົນສົ່ງສິນຄ້າ, ເຄື່ອງຂອງຄ້ຳ ປະກັນຕິດຕາມໄປນຳ ແລະ ປະຕິບັດຕາມເງື່ອນໄຂດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 31 ເທິງນີ້.

ຖ້າສິນຄ້າ, ເຄື່ອງຂອງນັ້ນຫາກບໍ່ແມ່ນປະເພດຈຳກັດ ຫຼື ຫ້າມສົ່ງອອກ ຫຼື ແມ່ນສິນຄ້າ, ເຄື່ອງຂອງຖືກຍົກເວັ້ນພາສີແລ້ວ ການຂົນສົ່ງນັ້ນຈະໃຊ້ໃບອະນຸຍາດເຄື່ອນ ຍ້າຍທຳມະດາກໍ ໄດ້ ໂດຍບໍ່ມີການຄ້ຳປະກັນ.

### ມາດຕາ 33. ການຂົນສົ່ງສິນຄ້າ, ເຄື່ອງຂອງຜ່ານດິນແດນ ສ.ປ.ປ.ລາວ

ສິນຄ້າ, ເຄື່ອງຂອງທີ່ຖືກສົ່ງຈາກຕ່າງປະເທດ ຕາມລະບົບການຂົນສົ່ງຜ່ານແດນ ໂດຍຜ່ານ ສ.ປ.ປ.ລາວ ໄປຍັງປະເທດທີສາມຕ້ອງມີໃບຂົນສົ່ງສິນຄ້າ, ເຄື່ອງຂອງຜ່ານ

ແດນຄໍ້າປະກັນ ຊຶ່ງແມ່ນດ່ານພາສີຕົ້ນທາງອອກໃຫ້ຕິດຕາມໄປນໍາ ແລະປະຕິບັດຕາມເງື່ອນໄຂດຽວ ດັ່ງທີ່ໄດ້ກໍານົດ ໄວ້ໃນມາດຕາ 31 ເທິງນີ້. ສິນຄ້າ, ເຄື່ອງຂອງຜ່ານແດນຈະໄດ້ຮັບການງົດເກັບພາສີ. ເຈົ້າຂອງ ຫຼື ຜູ້ຂົນສົ່ງສິນຄ້າ, ເຄື່ອງຂອງຜ່ານແດນນັ້ນຕ້ອງແຈ້ງໃບຂົນ ສົ່ງສິນຄ້າຜ່ານແດນຄໍ້າປະກັນ ຕໍ່ເຈົ້າໜ້າທີ່ພາສີ ຕາມເສັ້ນທາງທີ່ຕົນຜ່ານ ແລະດ່ານພາສີຢູ່ຊາຍແດນບ່ອນສົ່ງອອກ ເພື່ອຄວບ ຄຸມການຜ່ານ.

ສັນຍາຄໍ້າປະກັນທີ່ເຮັດໄວ້ໃນໃບຂົນສົ່ງສິນຄ້າ, ເຄື່ອງຂອງຜ່ານແດນຄໍ້າປະກັນຈະສິ້ນ ສຸດລົງໄດ້ ກໍຕໍ່ເມື່ອໄດ້ມີການຢັ້ງຢືນຈາກເຈົ້າໜ້າທີ່ພາສີຊາຍແດນ ທີ່ປະຈໍາການຢູ່ຈຸດຜ່ານອອກຊາຍແດນ ວ່າສິນຄ້າ, ເຄື່ອງຂອງນັ້ນ ໄດ້ອອກຈາກຊາຍແດນ ສ.ປ.ປ. ລາວ ໄປແລ້ວ. ສັນຍາຄໍ້າປະກັນ ຈະສິ້ນສຸດແຕ່ສະເພາະຈໍານວນ ແລະຊະນິດສິນຄ້າ, ເຄື່ອງຂອງ ທີ່ໄດ້ອອກຈາກດິນແດນ ສ.ປ.ປ.ລາວ ແລ້ວເທົ່ານັ້ນ.

## ໝວດທີ 3 ສາງສິນຄ້າ, ເຄື່ອງຂອງ ແລະ ລະບອບສາງ

### ມາດຕາ 34. ສາງສິນຄ້າ, ເຄື່ອງຂອງ

ສາງສິນຄ້າ, ເຄື່ອງຂອງ ແມ່ນບ່ອນເກັບມ້ຽນສິນຄ້າ, ເຄື່ອງຂອງຊົ່ວຄາວ ທີ່ຕັ້ງຢູ່ໃນອານາເຂດພາສີ ແລະຢູ່ພາຍໃຕ້ການຄວບຄຸມຂອງເຈົ້າໜ້າທີ່ພາສີ ເພື່ອລໍຖ້າແຈ້ງເສຍພາສີເປັນ ລາຍລະອຽດ.

### ມາດຕາ 35. ລະບອບສາງ

ລະບອບສາງ ແມ່ນລະບຽບການນໍາເອົາສິນຄ້າ, ເຄື່ອງຂອງ ທີ່ມີຈຸດປະສົງເພື່ອສົ່ງ ອອກ-ນໍາເຂົ້າປະເທດ ເຂົ້າເກັບມ້ຽນໃນສາງພາຍໃນກໍານົດເວລາອັນແນ່ນອນໂດຍງົດເກັບພາ ສີ ແລະຢູ່ພາຍໃຕ້ການກວດກາຂອງລັດຖະການພາສີ ເພື່ອລໍຖ້າປະຕິບັດຕາມລະບອບພາສີ.

ສາງເກັບສິນຄ້າ, ເຄື່ອງຂອງທີ່ຈັດເຂົ້າເປັນລະບອບສາງ ມີ 4 ປະເພດຄື :

1. ສາງຈິງ ແມ່ນບ່ອນເກັບມ້ຽນສິນຄ້າ,ເຄື່ອງຂອງທົ່ວໄປທີ່ມີລັກສະນະປົກກະຕິຊຶ່ງບໍ່ ກວມເອົາສິນຄ້າ, ເຄື່ອງຂອງທີ່ຖືກຈັດໄວ້ໃນປະເພດສາງທີ 2, 3 ແລະ 4 ຂອງມາດ ຕານີ້;
2. ສາງພາງ ແມ່ນບ່ອນເກັບມ້ຽນສິນຄ້າ, ເຄື່ອງຂອງ ສໍາລັບຮ້ານຄ້າປອດພາສີຊຶ່ງມີ ສັນຍາຄໍ້າປະກັນວ່າຈະຂາຍສິນຄ້າ, ເຄື່ອງຂອງໃຫ້ແຕ່ຜູ້ທີ່ຈະອອກໄປຕ່າງປະເທດ ແລະ ຈໍາໜ່າຍຕາມລະບຽບການສະເພາະ;
3. ສາງອຸດສາຫະກໍາ ແມ່ນບ່ອນເກັບມ້ຽນສິນຄ້າ, ເຄື່ອງຂອງ ທີ່ຜູ້ປະກອບການສົ່ງ ອອກ-ນໍາເຂົ້າເປັນການຊົ່ວຄາວ ເພື່ອປະກອບ, ດັດແປງ, ປຸງແຕ່ງ ຫຼື ສ້ອມແປງ ແລ້ວຈັດເຂົ້າຕາມລະບອບພາສີ;
4. ສາງພິເສດ ແມ່ນບ່ອນເກັບມ້ຽນສິນຄ້າ, ເຄື່ອງຂອງທີ່ມີລັກສະນະພິເສດຊຶ່ງໄດ້ແກ່ :

ກ. ສັດມີຊີວິດ;

ຂ. ສິນຄ້າ, ເຄື່ອງຂອງປະເພດຈຳກັດ ຫຼື ຕົກຢູ່ໃນການຄວບຄຸມຄຸ້ມຄອງພິເສດ;

ຄ. ສິນຄ້າ, ເຄື່ອງຂອງທີ່ມີຄວາມສ່ຽງສູງ ແລະເປັນອັນຕະລາຍ ຊຶ່ງບໍ່ເໝາະສົມ ເກັບມ້ຽນໄວ້ໃນປະເພດສາງອື່ນ.

ກະຊວງການເງິນ ເປັນຜູ້ອະນຸຍາດໃຫ້ສ້າງຕັ້ງລະບອບສາງ, ກຳນົດລະບຽບການຕ່າງໆ ກ່ຽວກັບສະຖານທີ່ປຸກສ້າງສາງ, ການຈັດຕັ້ງ, ການນຳໃຊ້, ການຄວບຄຸມ, ການກຳນົດເວລາເກັບ ມ້ຽນສິນຄ້າ, ເຄື່ອງຂອງໄວ້ໃນແຕ່ລະລະບອບສາງ.

## ມາດຕາ 36. ລະບຽບການຄຸ້ມຄອງສາງ

ສິນຄ້າ, ເຄື່ອງຂອງປະເພດຈຳກັດທີ່ນຳເຂົ້າມາຜ່ານ ສ.ປ.ປ.ລາວ ອາດຈະໄດ້ຮັບອະ ນຸຍາດໃຫ້ນຳເຂົ້າໄວ້ໃນປະເພດສາງໃດໜຶ່ງ ທີ່ກ່າວມາຂ້າງເທິງນີ້ກໍໄດ້ ແຕ່ຕ້ອງນຳອອກນອກປະເທດຄືນ ພາຍໃນກຳນົດເວລາອັນແນ່ນອນ.

ເຈົ້າໜ້າທີ່ພາສີມີສິດກວດເບິ່ງບັນຊີ, ສິນຄ້າ, ເຄື່ອງຂອງ ທີ່ຢູ່ໃນສາງປະເພດຕ່າງໆໄດ້ທຸກ ເວລາຕາມລະບຽບການ ຖ້າເຫັນວ່າມີຄວາມຈຳເປັນ.

ໃນກໍລະນີທີ່ເຈົ້າໜ້າທີ່ພາສີໄດ້ພິສູດເຫັນວ່າ ສິນຄ້າ, ເຄື່ອງຂອງຢູ່ໃນສາງ ຫາກຂາດຫາຍ ຫຼື ມີຈຳນວນບໍ່ຄົບຖ້ວນຕາມບັນຊີທີ່ໄດ້ແຈ້ງໄວ້ໃນເບື້ອງຕົ້ນ ຜູ້ເປັນເຈົ້າຂອງສາງຕ້ອງຮັບຜິດຊອບຕໍ່ການເສຍຄ່າພາສີ ແລະ ພັນທະອື່ນໆ ຕາມອັດຕາທີ່ນຳໃຊ້ໃນວັນກວດເຫັນການ ເສຍຫາຍນັ້ນ ພ້ອມທັງຮັບຜິດຊອບຕາມລະບຽບກົດໝາຍ, ຍົກເວັ້ນກໍລະນີເກີດເຫດສຸດວິໄສ.

ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ທີ່ຖືກງົດເກັບພາສີ ອອກຈາກສາງນີ້ໄປຫາສາງອື່ນ, ໄປຫາດ່ານພາສີ ຫຼື ສົ່ງອອກຄືນ ຕ້ອງມີໃບເຄື່ອນຍ້າຍສິນຄ້າ, ເຄື່ອງຂອງຄ້ຳປະກັນຕິດຕາມໄປນຳ ຊຶ່ງອອກໃຫ້ໂດຍເຈົ້າໜ້າທີ່ພາສີ.

# ໝວດທີ 4 ລະບຽບການສົ່ງອອກ-ນຳເຂົ້າຊົ່ວຄາວ

## ມາດຕາ 37. ການສົ່ງອອກສິນຄ້າ, ເຄື່ອງຂອງຊົ່ວຄາວທົ່ວໄປ

ການນຳເອົາສິນຄ້າ, ເຄື່ອງຂອງອອກນອກປະເທດເປັນການຊົ່ວຄາວ, ໃນເວລານຳກັບຄືນ ປະເທດ ຖ້າຫາກມີການດັດແປງ, ເສີມແຕ່ງ ຫຼື ເພີ່ມເຕີມອຸປະກອນໃດໜຶ່ງ ຕ້ອງໄດ້ເສຍພາສີ ແລະພັນທະອື່ນໆ ຕາມລະບຽບການ ໂດຍຖືເອົາມູນຄ່າຂອງການດັດແປງ, ເສີມແຕ່ງ ຫຼື ມູນຄ່າວັດຖຸ ສິ່ງຂອງຊື້ເພີ່ມເຂົ້າໃໝ່ນັ້ນ ເປັນພື້ນຖານໃນການຄິດໄລ່ຄ່າເສຍພາສີ ແລະພັນທະອື່ນໆ.

ຜູ້ທີ່ເດີນທາງອອກນອກປະເທດຊົ່ວຄາວ ຈະນຳເອົາສິ່ງຂອງສ່ວນຕົວ ຊຶ່ງບໍ່ແມ່ນປະເພດຈຳ ກັດ ຫຼື ຫ້າມສົ່ງອອກ ໄປນຳຊົ່ວຄາວກໍໄດ້ ໂດຍຈະໄດ້ຮັບການງົດເກັບພາສີ ແລະພັນທະອື່ນໆ.

ໃນການນຳເອົາສິ່ງຂອງສ່ວນຕົວອອກຊົ່ວຄາວ ຜູ້ນຳອອກຕ້ອງແຈ້ງສິ່ງຂອງສ່ວນຕົວນັ້ນລົງໃນແບບພິມ ທີ່ເຈົ້າໜ້າທີ່ພາສີໄດ້ກຳນົດໄວ້.

## ມາດຕາ 38. ການສົ່ງອອກຊົ່ວຄາວ ສິນຄ້າ, ເຄື່ອງຂອງປະເພດຈຳກັດ

ການນຳເອົາສິນຄ້າ, ເຄື່ອງຂອງປະເພດຈຳກັດ ອອກຈາກ ສ.ປ.ປ.ລາວ ເປັນການຊົ່ວຄາວ ຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງຂອງລັດ ແລະ ມີສັນຍາຮັບປະກັນຈາກບຸກຄົນທີສາມ ວ່າຈະນຳສິນຄ້າ, ເຄື່ອງຂອງນັ້ນກັບຄືນມາ ຕາມຈຳນວນ ແລະ ສະພາບເດີມ.

ໃນກໍລະນີທີ່ບໍ່ນຳເອົາສິນຄ້າ, ເຄື່ອງຂອງກັບຄືນປະເທດ ຕ້ອງປະຕິບັດຕາມເງື່ອນໄຂທີ່ ໄດ້ກຳນົດໄວ້ໃນສັນຍາຮັບປະກັນ.

## ມາດຕາ 39. ການນຳເຂົ້າສິນຄ້າ, ເຄື່ອງຂອງຊົ່ວຄາວທົ່ວໄປ

ລະບຽບການນຳເຂົ້າສິນຄ້າ, ເຄື່ອງຂອງເປັນການຊົ່ວຄາວ ຕ້ອງປະຕິບັດດັ່ງນີ້ :

1. ສິນຄ້າ, ເຄື່ອງຂອງຈະຖືກຈັດເຂົ້າໃນລະບອບການນຳເຂົ້າຊົ່ວຄາວໄດ້ ກໍຕໍ່ເມື່ອໃນເວ ລານຳເຂົ້ານັ້ນໄດ້ລະບຸໄວ້ຢ່າງຈະແຈ້ງວ່າ ສິນຄ້າ, ເຄື່ອງຂອງນັ້ນຈະຖືກນຳອອກຄືນ ຕາມຈຳນວນເດີມ ແລະ ໃນເວລາທີ່ທາງການໄດ້ກຳນົດໄວ້ ແຕ່ບໍ່ໃຫ້ເກີນ 2 ປີ; ໃນກໍ ລະນີທີ່ມີໂຄງການຍາວນານ ກໍສາມາດຕໍ່ໄດ້ຄັ້ງລະ 2 ປີ, ແຕ່ສູງສຸດບໍ່ໃຫ້ເກີນກຳນົດ ເວລາສິ້ນສຸດໂຄງການ;
2. ສິນຄ້າ, ເຄື່ອງຂອງທີ່ນຳເຂົ້າຊົ່ວຄາວ ຕ້ອງໄດ້ຮັບການງົດເກັບພາສີໃນເວລານຳເຂົ້າ ແລະຍົກເວັ້ນພາສີໃນເວລາສົ່ງອອກ ແຕ່ຕ້ອງຢູ່ພາຍໃຕ້ການຄຸ້ມຄອງຂອງເຈົ້າໜ້າທີ່ ພາສີ ຈົນຮອດເວລາສົ່ງອອກຄືນ;
3. ປະເພດສິນຄ້າ, ເຄື່ອງຂອງ ທີ່ຈັດເຂົ້າຢູ່ໃນລະບອບການນຳເຂົ້າຊົ່ວຄາວລວມມີ :
   - ກ. ສິນຄ້າ, ເຄື່ອງຂອງທີ່ນຳເຂົ້າມາເພື່ອຮັບໃຊ້ຈຸດປະສົງໃດໜຶ່ງ ເຊັ່ນ : ຮັບໃຊ້ ນັກການທູດ ແລະ ອົງການຈັດຕັ້ງສາກົນປະຈຳ ສ.ປ.ປ.ລາວ;
   - ຂ. ສິນຄ້າ, ເຄື່ອງຂອງທີ່ນຳເຂົ້າມາເພື່ອຮັບໃຊ້ງານວາງສະແດງ, ການສຶກສາ, ການທົດລອງ ແລ້ວນຳອອກຄືນ ຕາມຈຳນວນ ແລະ ສະພາບເດີມ;
   - ຄ. ສິນຄ້າ, ເຄື່ອງຂອງທີ່ນຳເຂົ້າມາເພື່ອປຸງແຕ່ງ, ປະກອບເປັນຜະລິດຕະພັນສຳເລັດຮູບ, ເຄິ່ງສຳເລັດຮູບ, ດັດແປງ ຫຼື ສ້ອມແປງແລ້ວນຳອອກຄືນ;
   - ງ. ພາຫະນະຮັບໃຊ້ການຜະລິດທາງກິງ, ກົນຈັກໜັກ, ອຸປະກອນເຄື່ອງມືການຜະລິດ, ເຄື່ອງອະໄຫຼ່, ວັດສະດຸ ແລະອຸປະກອນອື່ນໆກ່ຽວຂ້ອງ ທີ່ນຳ ເຂົ້າມາຮັບໃຊ້ໃນໂຄງການສະເພາະ ຫຼື ການ

ຜະລິດສະເພາະໃດໜຶ່ງເຊັ່ນ: ໂຄງການປະມູນສາກົນ, ບໍລິສັດຕ່າງປະເທດ ແລະໂຄງການຊ່ວຍເຫຼືອ ລ້າຂອງຕ່າງປະເທດ. ສຳລັບການນຳເຂົ້າພາຫະນະຮັບໃຊ້ການຜະລິດທາງ ອ້ອມ ໂດຍສະເພາະລົດທີ່ມີບ່ອນນັ່ງແຕ່ 30 ບ່ອນນັ່ງລົງມາ ຕ້ອງເສຍພາສີ ແລະພັນທະອື່ນໆຕາມລະບຽບການ ໃນເວລານຳເຂົ້າ, ເມື່ອສຳເລັດກິດຈະການແລ້ວ ເຈົ້າຂອງພາຫະນະຕ້ອງນຳອອກຄືນ, ສ່ວນຄ່າພາສີ ແລະພັນທະອື່ນໆ ທີ່ໄດ້ຊຳລະໃນເວລານຳເຂົ້າ ກໍຈະຖືກສົ່ງຄືນ;

ຈ. ຖົງເປົ່າ, ຕູ້ບັນຈຸສິນຄ້າເປົ່າ, ວັດຖຸຫຸ້ມຫໍ່ສຳລັບສິນຄ້າສົ່ງອອກ;

ສ. ຟີມຮູບເງົາທີ່ເຊົ່າມາ;

ຊ. ສິນຄ້າ, ເຄື່ອງຂອງອື່ນໆ ຕາມລະບຽບກົດໝາຍ;

4. ສິນຄ້ານຳເຂົ້າຊົ່ວຄາວພາຍໃຕ້ລະບອບງົດເກັບພາສີ ຫ້າມໂອນ, ຂາຍ ຫຼື ແລກປ່ຽນ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ. ຖ້າຫາກຂາຍ, ໂອນ ຫຼື ແລກ ປ່ຽນ ຕ້ອງໄດ້ເສຍພາສີ ແລະພັນທະອື່ນໆຢ່າງຄົບຖ້ວນຕາມລະບຽບການ. ຖ້າຫາກຂາຍ, ໂອນ ຫຼື ແລກປ່ຽນບໍ່ໄດ້ຮັບອະນຸຍາດຈະຕ້ອງໄດ້ປະຕິບັດຕາມມາດຕະ ການທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍສະບັບນີ້;

5. ສິ່ງເສດເຫຼືອຈາກການປຸງແຕ່ງ, ຈາກການດັດແປງ ຫຼື ຜະລິດຕະພັນສຳເລັດຮູບ, ເຄິ່ງສຳເລັດຮູບ ທີ່ມີຄຸນນະພາບບໍ່ສອດຄ່ອງກັບເງື່ອນໄຂສົ່ງອອກຄືນໄດ້ນັ້ນ ຖ້າຈະເອົາໄປນຳໃຊ້ ຫຼື ເອົາໄປຈຳໜ່າຍພາຍໃນປະເທດ ຈະຕ້ອງໄດ້ເສຍພາສີ ແລະ ພັນທະອື່ນໆ ຢ່າງຄົບຖ້ວນຕາມລະບຽບການ;

6. ຜູ້ເດີນທາງເຂົ້າມາຊົ່ວຄາວໃນ ສ.ປ.ປ.ລາວ ທີ່ມີສິ່ງຂອງສ່ວນຕົວຕິດຕົວມານຳ ຊຶ່ງ ເໝາະສົມໃນການນຳໃຊ້ໃນໄລຍະອາໄສຢູ່ລາວ ແລະບໍ່ແມ່ນປະເພດຈຳກັດ ຫຼືຕ້ອງ ຫ້າມນັ້ນ ຈະໄດ້ຮັບການງົດເກັບພາສີ ແລະພັນທະອື່ນໆ ແຕ່ຕ້ອງນຳເອົາສິ່ງຂອງເຫຼົ່ານັ້ນອອກຄືນໃນກຳນົດເວລາທີ່ໄດ້ຮັບອະນຸຍາດໃຫ້ຢູ່ ສ.ປ.ປ.ລາວ ໂດຍຕ້ອງມີໃບແຈ້ງພາສີຄ້ຳປະກັນ.

### ມາດຕາ 40. ການຄ້ຳປະກັນການນຳເຂົ້າຊົ່ວຄາວ

ໃນການນຳເຂົ້າສິນຄ້າ, ເຄື່ອງຂອງຊົ່ວຄາວນັ້ນ ຜູ້ນຳເຂົ້າຕ້ອງເຮັດສັນຍາຄ້ຳປະກັນນຳ ລັດຖະການພາສີ ຊຶ່ງຕ້ອງກຳນົດຢ່າງຈະແຈ້ງວ່າ ສິນຄ້າ, ເຄື່ອງຂອງນັ້ນຈະນຳອອກນອກປະເທດຄືນ ຕາມກຳນົດເວລາ, ຈຳນວນ ແລະສະພາບເດີມ; ສ່ວນການນຳເຂົ້າພາຫະນະຮັບໃຊ້ ການຜະລິດທາງອ້ອມ ໂດຍສະເພາະລົດແຕ່ 30 ບ່ອນນັ່ງລົງມາ ນອກຈາກຕ້ອງເຮັດສັນຍາຄ້ຳ ປະກັນແລ້ວ ຍັງຈະຕ້ອງໄດ້ເສຍພາສີ ແລະ ພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍສະບັບນີ້.

## ພາກທີ V ສິນຄ້າ, ເຄື່ອງຂອງທີ່ຢູ່ພາຍໃຕ້ການຄວບຄຸມສະເພາະ

### ມາດຕາ 41. ເງື່ອນໄຂໃນການຄວບຄຸມສະເພາະ

ສິນຄ້າ, ເຄື່ອງຂອງ ທີ່ຕົກຢູ່ໃນການຄວບຄຸມສະເພາະ ຂອງພາສີມີດັ່ງນີ້ :

1. ສິນຄ້າ, ເຄື່ອງຂອງ ທີ່ບໍ່ໄດ້ໄປແຈ້ງພາສີເປັນລາຍລະອຽດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 19 ຂອງກົດໝາຍສະບັບນີ້;
2. ສິນຄ້າ, ເຄື່ອງຂອງ ທີ່ຄ້າງສາງດ້ວຍເຫດຜົນອື່ນ.

ສິນຄ້າ, ເຄື່ອງຂອງ ທີ່ກ່າວຂ້າງເທິງນີ້ ເຈົ້າໜ້າທີ່ພາສີຕ້ອງໄດ້ຈົດເຂົ້າປຶ້ມບັນທຶກສະເພາະຂອງພາສີ.

ຖ້າວ່າສິນຄ້າ, ເຄື່ອງຂອງນັ້ນ ຫາກບໍ່ມີມູນຄ່າຊື້ຂາຍໄດ້ລັດຖະການພາສີ ຈະທໍາລາຍ ຖິ້ມຕາມລະບຽບການກໍໄດ້.

ສໍາລັບສິນຄ້າ, ເຄື່ອງຂອງ ທີ່ຕົກຢູ່ໃນການຄວບຄຸມສະເພາະຂອງພາສີ ຊຶ່ງເສື່ອມຄຸນນະພາບເສຍຄຸນໄວ, ມີຄວາມຫຍຸ້ງຍາກ ຫຼື ບໍ່ເໝາະສົມໃນການເກັບມ້ຽນໄວ້ໃນສາງ, ລັດຖະການພາສີ ຈະນໍາອອກປະມູນຂາຍທົ່ວໄປຕາມລະບຽບການໂດຍທັນທີກໍໄດ້ ແລ້ວຫັກຄ່າສິ້ນເປືອງຕ່າງໆ, ຄ່າພາສີ ແລະ ພັນທະອື່ນໆ, ຄ່າປັບໃໝອອກ ຕາມກົດໝາຍສະບັບນີ້, ສ່ວນເງິນທີ່ເຫຼືອນັ້ນລັດຖະການພາສີຈະຮັກສາໄວ້ລໍຖ້າເຈົ້າຂອງສິນຄ້າ, ເຄື່ອງຂອງໃນກໍານົດເວລາ ສີ່ເດືອນ ນັບແຕ່ວັນໄດ້ຈົດບັນທຶກສະເພາະຂອງພາສີ ເປັນຕົ້ນໄປ.

ຄ່າຝາກສາງ ແລະ ຄ່າອື່ນໆ, ທຸກການເສຍຄຸນ ຫຼື ເສື່ອມມູນຄ່າ ແມ່ນຄວາມຮັບຜິດຊອບຂອງຜູ້ເປັນເຈົ້າຂອງສິນຄ້າ, ເຄື່ອງຂອງນັ້ນ.

### ມາດຕາ 42. ເງື່ອນໄຂສິ້ນສຸດການຄວບຄຸມສະເພາະ

ເຈົ້າຂອງສິນຄ້າ, ເຄື່ອງຂອງ ມີສິດຮ້ອງຂໍເອົາສິນຄ້າ, ເຄື່ອງຂອງ, ຈໍານວນເງິນຄືນ ຈາກການຄວບຄຸມສະເພາະຂອງພາສີ ພາຍໃນກໍານົດເວລາ ສີ່ເດືອນ ນັບແຕ່ວັນໄດ້ຈົດສິນຄ້າ, ເຄື່ອງຂອງ ໄວ້ໃນປຶ້ມບັນທຶກສະເພາະຂອງພາສີເປັນຕົ້ນໄປ ແຕ່ຕ້ອງ :

1. ຊໍາລະຄ່າປັບໃໝ 0,01% ຂອງມູນຄ່າສິນຄ້າ, ເຄື່ອງຂອງ ໂດຍຄິດໄລ່ເປັນແຕ່ລະວັນ ນັບແຕ່ວັນທີ່ໄດ້ຈົດເຂົ້າປຶ້ມບັນທຶກສະເພາະ ຂອງພາສີ ບໍ່ນັບວັນພັກລັດຖະການ;
2. ຊໍາລະຄ່າພາສີ ແລະພັນທະອື່ນໆທີ່ຕ້ອງຈ່າຍ ໃນກໍລະນີທີ່ຜູ້ເປັນເຈົ້າຂອງມີຈຸດປະ ສົງຢາກແຈ້ງສິນຄ້າ, ເຄື່ອງຂອງ ເພື່ອການຊົມໃຊ້ພາຍໃນ;
3. ປະກອບໃບແຈ້ງພາສີເປັນລາຍລະອຽດໃຫ້ຖືກຕ້ອງ ແລະ ຄົບຖ້ວນ ໃນກໍລະນີທີ່ຜູ້ເປັນເຈົ້າຂອງມີຈຸດປະສົງ ຢາກນໍາອອກຄືນໄປຕ່າງປະເທດ, ນໍາເຂົ້າລະບອບສາງ ຫຼື ນໍາ ເຂົ້າເຂດປອດພາສີ.

ສິນຄ້າ, ເຄື່ອງຂອງ, ຈຳນວນເງິນ ທີ່ຕົກຢູ່ໃນການຄວບຄຸມສະເພາະຂອງພາສີ ເກີນກຳ ນົດເວລາສີ່ເດືອນ ພາຍຫຼັງທີ່ລັດຖະການພາສີໄດ້ອອກປະກາດ ຫຼື ແຈ້ງການໄປແລ້ວ ຖ້າບໍ່ມີເຈົ້າຂອງມາທວງທາວເອົານັ້ນ ກໍຈະຕົກເປັນຂອງລັດ.

## ພາກທີ VI ການຍົກເວັ້ນພາສີ ແລະ ພັນທະອື່ນໆ

### ມາດຕາ 43. ການຍົກເວັ້ນທົ່ວໄປ

ສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າຊຶ່ງຈະໄດ້ຮັບການຍົກເວັ້ນພາສີມີຄື :

1. ສະບຽງອາຫານ ບາງຊະນິດຂອງຜູ້ເດີນທາງ;
2. ເຄື່ອງຮັບໃຊ້ຄອບຄົວບາງປະເພດ ໃນເວລາຍົກຍ້າຍບ່ອນຢູ່;
3. ວັດຖຸສິ່ງຂອງບາງຊະນິດທີ່ໄດ້ມາຈາກການສືບທອດມູນມໍລະດົກ;
4. ເຄື່ອງຂອງຕິດຕົວ ແລະຂອງຂວັນຂອງຄະນະຜູ້ແທນ ທີ່ໄປເຄື່ອນໄຫວວຽກງານຢູ່ ຕ່າງປະເທດ;
5. ເຄື່ອງຂອງສ່ວນຕົວບາງຊະນິດ ແລະບາງຈຳນວນ (ນອກຈາກພາຫະນະທີ່ຂັບເຄື່ອນດ້ວຍແຮງຈັກ) ຂອງນັກຮຽນ, ນັກສຶກສາ, ລັດຖະກອນ ແລະນັກການທູດລາວທີ່ນຳເຂົ້າມາ ພາຍຫຼັງສິ້ນສຸດການສຶກສາ, ການຝຶກອົບຮົມ ຫຼື ການເຄື່ອນໄຫວວຽກງານທາງລັດຖະການຢູ່ຕ່າງປະເທດ ແຕ່ ສາມເດືອນຂຶ້ນໄປ ແລະເປັນສິນຄ້າ, ເຄື່ອງຂອງ ທີ່ບໍ່ມີລັກສະນະທາງການຄ້າ;
6. ເຄື່ອງຮັບໃຊ້ອັນຈຳເປັນແກ່ການສຶກສາ ແລະ ວັດຖຸອຸປະກອນນຳເຂົ້າເພື່ອທົດ ລອງ ທີ່ບໍ່ມີລັກສະນະທາງການຄ້າ;
7. ວັດຖຸອຸປະກອນທີ່ຮັບໃຊ້ໃຫ້ແກ່ການຄົ້ນຄວ້າວິທະຍາສາດ;
8. ນ້ຳມັນເຊື້ອໄຟຄ້າງຖັງສະເພາະຂອງພາຫະນະທີ່ເດີນດ້ວຍແຮງຈັກ;
9. ນ້ຳມັນເຊື້ອໄຟທີ່ຮັບໃຊ້ການບິນລະຫວ່າງຊາດຂອງເຮືອບິນລາວ ແລະເຮືອບິນຕ່າງ ປະເທດ ບົນພື້ນຖານການຕົກລົງ ຫຼື ຕອບແທນ ຊຶ່ງກັນ ແລະ ກັນ;
10. ເຄື່ອງຂອງຕົວຢ່າງ ທີ່ບໍ່ມີມູນຄ່າທາງການຄ້າ;
11. ຂອງຂວັນ, ເຄື່ອງຊ່ວຍເຫຼືອ ຫຼື ກູ້ຢືມຈາກຕ່າງປະເທດ ລວມທັງການຊຳລະໜີ້ ສິນຂອງລັດຖະບານຕໍ່ຕ່າງປະເທດ;
12. ເຄື່ອງຊ່ວຍເຫຼືອ ເພື່ອມະນຸດສະທຳ;
13. ເຄື່ອງຮັບໃຊ້ວິຊາສະເພາະການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
14. ເຄື່ອງໃຊ້ອັນຈຳເປັນບາງຊະນິດທາງສາດສະໜາ ບົນພື້ນຖານການອານຸມັດຂອງອົງ ການລັດທີ່ກ່ຽວຂ້ອງ.

ລັດຖະບານເປັນຜູ້ກຳນົດລະອຽດ ກ່ຽວກັບສິນຄ້າ, ເຄື່ອງຂອງ ທີ່ຈະຍົກເວັ້ນພາສີ; ໃນກໍລະນີທີ່ຈຳເປັນ ກໍສາມາດອອກຂໍ້ກຳນົດລາຍການສິນຄ້າ, ເຄື່ອງຂອງຍົກເວັ້ນພາສີເພີ່ມເຕີມ ກໍໄດ້.

### ມາດຕາ 44. ການຍົກເວັ້ນ ແລະ ຫຼຸດຜ່ອນພາສີເພື່ອສົ່ງເສີມການລົງທຶນ

ທຸກການນຳເຂົ້າຕາມນະໂຍບາຍສົ່ງເສີມການລົງທຶນ ຈະໄດ້ຖືກປະຕິບັດຕາມເງື່ອນໄຂບຸລິມະສິດ ທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ແລະການລົງທຶນ ຕ່າງປະເທດເທົ່ານັ້ນ.

### ມາດຕາ 45. ການຍົກເວັ້ນພາສີທາງການທູດ ແລະ ອົງການຈັດຕັ້ງສາກົນ

ສິນຄ້າ, ເຄື່ອງຂອງ ທີ່ຈະໄດ້ຮັບການຍົກເວັ້ນພາສີ ຫຼື ງົດເກັບພາສີ ແລະພັນທະອື່ນໆບົນ ພື້ນຖານການຕອບແທນຊຶ່ງກັນ ແລະ ກັນ ມີດັ່ງນີ້ :

1. ເຄື່ອງໃຊ້ສ່ວນຕົວຂອງນັກການທູດຕ່າງປະເທດ ແລະ ຂອງພະນັກງານອົງການຈັດຕັ້ງ ສາກົນ ທີ່ໄດ້ຮັບອະພິສິດທາງການທູດ;
2. ເຄື່ອງຮັບໃຊ້ຂອງບັນດາສະຖານທູດ ແລະຂອງອົງການຈັດຕັ້ງສາກົນປະຈຳ ສ.ປ.ປ. ລາວ ບົນພື້ນຖານການອະນຸມັດຂອງກະຊວງການຕ່າງປະເທດ ແຫ່ງ ສ.ປ.ປ.ລາວ;
3. ເຄື່ອງຂອງຕິດຕາມຄະນະຜູ້ແທນຂັ້ນສູງຈາກຕ່າງປະເທດ.

ສຳລັບເຄື່ອງຂອງ ຂອງອົງການຈັດຕັ້ງລັດຖະບານຕ່າງປະເທດ, ອົງການຈັດຕັ້ງສາກົນ ຫຼື ອົງການທີ່ບໍ່ສັງກັດລັດຖະບານຕ່າງປະເທດ ໃຫ້ປະຕິບັດຕາມສັນຍາທີ່ໄດ້ເຊັນກັນ ລະຫວ່າງລັດ ຖະບານ ແຫ່ງ ສ.ປ.ປ.ລາວ ກັບອົງການຈັດຕັ້ງທີ່ກ່ຽວຂ້ອງ.

ໃນກໍລະນີທີ່ມີຂໍ້ມູນຢ່າງໜັກແໜ້ນ, ເຈົ້າໜ້າທີ່ພາສີຈະທຳການກວດຄົ້ນສິນຄ້າ, ເຄື່ອງ ຂອງນັ້ນກໍໄດ້ ແຕ່ຕ້ອງດຳເນີນໂດຍຊ້ອງໜ້າເຈົ້າຂອງສິນຄ້າ, ເຄື່ອງຂອງ ຫຼືຜູ້ຕາງໜ້າທີ່ ໄດ້ຮັບມອບສັນທະ, ຜູ້ຕາງໜ້າກະຊວງການຕ່າງປະເທດ ແລະຜູ້ຕາງໜ້າທີ່ກ່ຽວຂ້ອງຂອງລັດ.

ໃນກໍລະນີທີ່ມີຂໍ້ມູນເຊື່ອຖືໄດ້ ແລະຖ້າສາມາດຢັ້ງຢືນໄດ້ຢ່າງໜັກແໜ້ນວ່າ ຖົງເມການ ທູດນັ້ນ ບັນຈຸສິ່ງຂອງທີ່ຕ້ອງຫ້າມ ຫຼືຈຳກັດການນຳເຂົ້າ ເຈົ້າໜ້າທີ່ພາສີຕ້ອງເຮັດບົດບັນທຶກສົ່ງຖົງເມອອກຄືນ ໂດຍສົມທົບກັບຜູ້ຕາງໜ້າຂອງກະຊວງການຕ່າງປະເທດ ແລະພະນັກງານສະ ຖານທູດທີ່ກ່ຽວຂ້ອງ.

ລັດຖະບານ ເປັນຜູ້ອອກລະບຽບການກ່ຽວກັບປະເພດ, ຊະນິດ ແລະຈຳນວນສິນຄ້າ, ເຄື່ອງຂອງ ທີ່ຍົກເວັ້ນ ຫຼື ງົດເກັບພາສີ ແລະ ພັນທະອື່ນໆ.

## ພາກທີ VII ພາສີກ່ຽວກັບເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ ແລະ ເຂດປອດພາສີ

### ມາດຕາ 46. ລະບຽບພາສີກ່ຽວກັບເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ

ສິນຄ້າ, ເຄື່ອງຂອງ ຢູ່ໃນເຂດເສດຖະກິດພິເສດ ຈະຖືກງົດເກັບພາສີ ແລະບໍ່ຢູ່ພາຍໃຕ້ ການຄວບຄຸມ ຢ່າງເປັນປົກກະຕິຂອງເຈົ້າໜ້າທີ່ພາສີ.

ສິນຄ້າ, ເຄື່ອງຂອງ ຢູ່ໃນເຂດເສດຖະກິດສະເພາະ ແມ່ນປະຕິບັດຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງ.

ສິນຄ້າ, ເຄື່ອງຂອງ ທີ່ມີຈຸດປະສົງນຳອອກຈາກເຂດເສດຖະກິດພິເສດ ແລະເຂດເສດຖະກິດສະເພາະ ເພື່ອມາຊົມໃຊ້ພາຍໃນປະເທດ ຕ້ອງປະຕິບັດຕາມລະບຽບການທີ່ກຳນົດໄວ້ໃນມາດ ຕາ 7 ຂອງກົດໝາຍພາສີສະບັບນີ້.

### ມາດຕາ 47. ເຂດ ແລະ ຮ້ານຄ້າປອດພາສີ

ສິນຄ້າ, ເຄື່ອງຂອງ ທີ່ຈຳໜ່າຍຢູ່ໃນເຂດປອດພາສີ ຈະຖືກງົດເກັບພາສີ ແລະບໍ່ຢູ່ພາຍ ໃຕ້ການຄວບຄຸມຢ່າງປົກກະຕິຂອງເຈົ້າໜ້າທີ່ພາສີ.

ສິນຄ້າ, ເຄື່ອງຂອງ ທີ່ຈຳໜ່າຍຢູ່ໃນຮ້ານຄ້າປອດພາສີຈະຖືກງົດເກັບພາສີ ແລະຢູ່ພາຍໃຕ້ການຄວບຄຸມຢ່າງປົກກະຕິຂອງເຈົ້າໜ້າທີ່ພາສີ.

ສິນຄ້າ, ເຄື່ອງຂອງ ທີ່ນຳອອກຈາກເຂດ ແລະ ຮ້ານຄ້າປອດພາສີ ເພື່ອມາຊົມໃຊ້ພາຍ ໃນປະເທດ ທີ່ມີຈຳນວນເກີນກວ່າລະບຽບການໄດ້ກຳນົດໄວ້ ຈະໄດ້ເສຍພາສີ ແລະ ພັນທະອື່ນໆ ຕາມລະບຽບການທົ່ວໄປ.

ກະຊວງການເງິນເປັນຜູ້ອອກລະບຽບການສະເພາະ ກ່ຽວກັບການຄຸ້ມຄອງເຂດແລະຮ້ານ ຄ້າປອດພາສີ.

## ພາກທີ VIII ການໃຊ້ເຮືອຂົນສົ່ງຜູ້ໂດຍສານ ຫຼື ຂົນສົ່ງສິນຄ້າ, ເຄື່ອງຂອງຕາມລຳແມ່ນ້ຳຊາຍແດນ

### ມາດຕາ 48. ການຂຶ້ນບັນຊີເຮືອຕາມແມ່ນ້ຳຊາຍແດນ

ເຮືອຕ່າງໆທີ່ເຈົ້າຂອງຕັ້ງພູມລຳເນົາຢູ່ ສ.ປ.ປ.ລາວ ເພື່ອດຳເນີນທຸລະກິດໂດຍສານ ຫຼື ຂົນສົ່ງສິນຄ້າ, ເຄື່ອງຂອງຕາມລຳແມ່ນ້ຳຊາຍແດນ ຕ້ອງຂຶ້ນບັນຊີໃຫ້ຖືກຕ້ອງຕາມລະບຽບກົດ ໝາຍ ຢູ່ດ່ານພາສີບ່ອນທີ່ເຈົ້າຂອງເຮືອສັງກັດຢູ່.

### ມາດຕາ 49. ລະບຽບພາສີກ່ຽວກັບການຂົນສົ່ງຕາມແມ່ນ້ຳຊາຍແດນ

ກ່ອນຈະຂົນສິນຄ້າ, ເຄື່ອງຂອງອອກ ຫຼື ເຂົ້າເຮືອນັ້ນ ເຮືອທີ່ຂົນສົ່ງສິນຄ້າ, ເຄື່ອງຂອງຕາມລຳແມ່ນ້ຳຊາຍແດນ ຕ້ອງເຂົ້າຈອດຢູ່ທ່າບ່ອນທີ່ມີດ່ານພາສີ ຫຼື ປ້ອມພາສີຕັ້ງຢູ່ເວັ້ນເສຍແຕ່ມີເຫດສຸກເສີນ. ໃນກໍລະນີດັ່ງກ່າວ ເຈົ້າຂອງເຮືອຕ້ອງເອົາປຶ້ມທະບຽນເຮືອ, ໃບຂົນສົ່ງສິນຄ້າ, ເຄື່ອງຂອງທາງນ້ຳແຈ້ງຕໍ່ເຈົ້າໜ້າທີ່ພາສີເພື່ອກວດກາ. ໃນເວລາເດີນທາງ ຫຼື ພາຍຫຼັງເຂົ້າທຽບ ທ່າ ຫຼື ຖ້າຫາກມີການກວດຄົ້ນເຮືອຕາມເສັ້ນທາງເດີນເຮືອເຈົ້າຂອງເຮືອຕ້ອງເອົາປຶ້ມທະບຽນເຮືອ ແລະໃບຂົນສົ່ງສິນຄ້າ, ເຄື່ອງຂອງທາງນ້ຳແຈ້ງຕໍ່ເຈົ້າໜ້າທີ່ພາສີເພື່ອກວດກາ ເຖິງວ່າເຮືອ ນັ້ນຈະບັນທຸກສິນຄ້າ, ເຄື່ອງຂອງ, ຜູ້ໂດຍສານ ຫຼື ບໍ່ກໍຕາມ.

ໃນກໍລະນີທີ່ມີການຊື້ຂາຍ, ໂອນ, ປ່ຽນແປງລັກສະນະຂອງເຮືອ ຫຼື ຢຸດເຊົາການເດີນເຮືອ ເຈົ້າຂອງເຮືອຕ້ອງແຈ້ງໃຫ້ລັດຖະການພາສີ ແລະ ອົງການທີ່ກ່ຽວຂ້ອງບ່ອນທີ່ເຮືອໄດ້ຂຶ້ນທະບຽນ ນັ້ນຊາບພາຍໃນກໍານົດເວລາຊາວວັນ ນັບແຕ່ວັນຂາຍ, ໂອນ, ຢຸດເຊົາການເດີນເຮືອ ຫຼື ປ່ຽນ ແປງລັກສະນະຂອງເຮືອເປັນຕົ້ນໄປ.

## ພາກທີ IX ການກະທໍາຜິດທາງພາສີ

### ໝວດທີ 1 ການຈັດແບ່ງການກະທໍາຜິດທາງພາສີ

#### ມາດຕາ 50. ປະເພດການກະທໍາຜິດ

ການກະທໍາຜິດທາງພາສີ ໄດ້ຈັດເປັນສອງປະເພດຄື : ການກະທໍາຜິດສະຖານເບົາ ແລະ ສະຖານໜັກ.

ການກະທໍາຜິດສະຖານເບົາມີສາມລະດັບຄື :

- ການກະທໍາຜິດສະຖານເບົາລະດັບທີ ໜຶ່ງ;
- ການກະທໍາຜິດສະຖານເບົາລະດັບທີ ສອງ;
- ການກະທໍາຜິດສະຖານເບົາລະດັບທີ ສາມ.

ການກະທໍາຜິດສະຖານໜັກມີສາມລະດັບຄື :

- ການກະທໍາຜິດສະຖານໜັກລະດັບທີ ໜຶ່ງ;
- ການກະທໍາຜິດສະຖານໜັກລະດັບທີ ສອງ;
- ການກະທໍາຜິດສະຖານໜັກລະດັບທີ ສາມ.

#### ມາດຕາ 51. ການກະທໍາຜິດສະຖານເບົາລະດັບທີໜຶ່ງ

ການກະທໍາຜິດສະຖານເບົາລະດັບທີໜຶ່ງ ມີດັ່ງນີ້ :

1. ການແຈ້ງຂໍ້ມູນເປັນລາຍລະອຽດ ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນຕາມຕົວຈິງ ໂດຍເຈດຕະນາ ຊຶ່ງບໍ່ມີຜົນສະທ້ອນຕໍ່ຄ່າພາສີ ແລະ ພັນທະອື່ນໆ;
2. ການຊຸກເຊື່ອງ, ຂັດຂືນ ບໍ່ຍອມມອບເອກະສານອັນຈໍາເປັນໃຫ້ແກ່ເຈົ້າໜ້າທີ່ພາສີຕາມທີ່ໄດ້ກໍານົດໄວ້ໃນມາດຕາ 76 ຂອງກົດໝາຍສະບັບນີ້;
3. ການລົບກວນ, ສ້າງຄວາມຫຍຸ້ງຍາກຕໍ່ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ພາສີ;
4. ການກະທໍາຜິດອື່ນໆ ຖ້າຫາກວ່າການກະທໍານັ້ນ ຫາກບໍ່ໄດ້ຈັດເຂົ້າໃນລະດັບອື່ນ;
5. ການແຈ້ງຊື່ຜູ້ຈັດສົ່ງສິນຄ້າ, ເຄື່ອງຂອງຢູ່ຕົ້ນທາງ ແລະຊື່ຂອງຜູ້ຮັບສິນຄ້າ, ເຄື່ອງຂອງ ຕົວຈິງຢູ່ປາຍທາງບໍ່ຖືກຕ້ອງໂດຍເຈດຕະນາ ຊຶ່ງບໍ່ມີຜົນສະທ້ອນຕໍ່ຄ່າພາສີ ແລະພັນ ທະອື່ນໆ;

6. ການນຳເອົາສິນຄ້າ, ເຄື່ອງຂອງເຂົ້າ ຫຼື ອອກ ສ.ປ.ປ.ລາວ ບໍ່ຖືກຕາມດ່ານທີ່ບົ່ງໄວ້ ໃນໃບອະນຸຍາດ.

ບຸກຄົນໃດທີ່ໄດ້ກະທຳຜິດສະຖານເບົາລະດັບທີໜຶ່ງນີ້ ຈະຖືກປັບໃໝ ແຕ່ 150.000 ກີບ ຫາ 5.000.000 ກີບ.

## ມາດຕາ 52. ການກະທຳຜິດສະຖານເບົາລະດັບທີສອງ

ການກະທຳຜິດສະຖານເບົາລະດັບສອງ ມີດັ່ງນີ້:

1. ການກະທຳຜິດສະຖານເບົາລະດັບທີໜຶ່ງ ຊຶ່ງໄດ້ລະເມີດເປັນຄັ້ງທີສອງ;
2. ການແຈ້ງຂໍ້ມູນບໍ່ຖືກຕ້ອງໂດຍເຈດຕະນາ ຊຶ່ງມີຜົນສະທ້ອນຕໍ່ຄ່າພາສີ ແລະ ພັນທະ ອື່ນໆເຊັ່ນ: ລະຫັດສິນຄ້າ, ຕົ້ນກຳເນີດສິນຄ້າ, ອັດຕາພາສີ-ອາກອນ, ມູນຄ່າແຈ້ງ ພາສີ ແລະ ຂໍ້ມູນອື່ນໆ ທີ່ມີຜົນສະທ້ອນຕໍ່ຄ່າພາສີ ແລະພັນທະອື່ນໆ;
3. ການແຈ້ງຫີບຫໍ່ສິນຄ້າ, ເຄື່ອງຂອງ ບໍ່ຖືກຕາມຈຳນວນຕົວຈິງ ຫຼື ການເອົາຫຼາຍຫົວໜ່ວຍ, ຫຼາຍຊະນິດສິນຄ້າໂຮມເຂົ້າກັນເປັນຫົວໜ່ວຍ ຫຼື ຊະນິດດຽວ ແລ້ວນຳມາແຈ້ງຕໍ່ເຈົ້າໜ້າທີ່ພາສີ ໂດຍມີເຈດຕະນາ ເພື່ອຫຼົບຫຼີກຄ່າພາສີ ແລະ ພັນທະອື່ນໆຕົວຈິງ;
4. ການແຈ້ງຫີບຫໍ່ສິນຄ້າ, ເຄື່ອງຂອງ ທີ່ຢູ່ໃນລະບອບງົດເກັບ, ຫຼຸດຜ່ອນ ແລະຍົກເວັ້ນ ພາສີ ບໍ່ຖືກຕາມຈຳນວນຕົວຈິງ ໂດຍເຈດຕະນາ;
5. ການນຳເຂົ້າສິນຄ້າ, ເຄື່ອງຂອງ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;
6. ການຫຼຸດ ຫຼື ເພີ່ມຈຳນວນສິນຄ້າ, ເຄື່ອງຂອງ ແລະ ການບໍ່ແຈ້ງຈຳນວນສິນຄ້າ, ເຄື່ອງຂອງທີ່ຢູ່ໃນລະບອບສາງ;
7. ການລະເມີດຕໍ່ລະບອບການນຳເຂົ້າ ຫຼື ການສົ່ງອອກສິນຄ້າ, ເຄື່ອງຂອງຊົ່ວຄາວ;
8. ການແຈ້ງຊື່ຜູ້ຈັດສົ່ງສິນຄ້າ, ເຄື່ອງຂອງຢູ່ຕົ້ນທາງ ແລະຊື່ຂອງຜູ້ຮັບສິນຄ້າ, ເຄື່ອງຂອງ ຕົວຈິງຢູ່ປາຍທາງບໍ່ຖືກຕ້ອງໂດຍເຈດຕະນາ ເພື່ອຫຼົບຫຼີກຄ່າພາສີ ແລະພັນທະອື່ນໆ;
9. ການແຈ້ງຂໍ້ມູນບໍ່ຖືກຕ້ອງເພື່ອຈຸດປະສົງຢາກໄດ້ຮັບນະໂຍບາຍຍົກເວັ້ນພາສີ;
10. ການນຳໃຊ້ພາຫະນະ ຫຼື ສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າໃນລະບອບຊົ່ວຄາວ, ຍົກເວັ້ນ ຫຼື ຫຼຸດຜ່ອນພາສີ ໂດຍບໍ່ຖືກຕ້ອງເປົ້າໝາຍ ຫຼື ລະເມີດລະບອບການນຳເຂົ້າຊົ່ວຄາວ.

ບຸກຄົນຜູ້ໃດທີ່ໄດ້ກະທຳຜິດສະຖານເບົາລະດັບທີສອງນີ້ ຈະຖືວ່າເປັນຜູ້ຫຼົບຫຼີກເຊື່ອງອຳ ແນໃສ່ຫຼຸດຜ່ອນ ຫຼື ຫຼີກລ້ຽງການເສຍຄ່າພາສີ ແລະພັນທະອື່ນໆ ແລະຈະຕ້ອງເສຍຄ່າພາສີ ແລະ ພັນທະອື່ນໆ ຕາມລະບຽບກົດໝາຍໃຫ້ຄົບຖ້ວນ ພ້ອມທັງຈະຖືກປັບໃໝໜຶ່ງເທົ່າຂອງຄ່າພາສີ ແລະ ພັນທະອື່ນໆ ທີ່ຖືກຫຼີກລ້ຽງເຊື່ອງອຳ.

ສິນຄ້າ, ເຄື່ອງຂອງ ພ້ອມທັງວັດຖຸສິ່ງຂອງທີ່ນໍາໃຊ້ເພື່ອປິດບັງ ແລະ ພາຫະນະທີ່ຮັບໃຊ້ການກະທໍາຜິດ ຊຶ່ງບໍ່ແມ່ນປະເພດຈໍາກັດທີ່ຖືກຢຶດໄວ້ນັ້ນ ຈະຖືກສົ່ງຄືນໃຫ້ເຈົ້າຂອງພາຍຫຼັງໄດ້ຊໍາລະຄ່າພາສີ ແລະ ພັນທະອື່ນໆ ແລະ ຄ່າປັບໃໝຢ່າງຄົບຖ້ວນແລ້ວ.

### ມາດຕາ 53. ການກະທໍາຜິດສະຖານເບົາລະດັບທີສາມ

ການກະທໍາຜິດສະຖານເບົາລະດັບທີສາມ ມີດັ່ງນີ້:

- ການກະທໍາຜິດສະຖານເບົາ ລະດັບສອງຊຶ່ງໄດ້ລະເມີດເປັນຄັ້ງທີສອງ;
- ການນໍາເອົາສິນຄ້າ, ເຄື່ອງຂອງ ທີ່ບໍ່ແມ່ນປະເພດຈໍາກັດ ອອກ ຫຼື ເຂົ້າ ສ.ປ.ປ. ລາວ ໂດຍມີເຈດຕະນາຫຼົບຫຼີກພາສີ;
- ການອໍາພາງປິດບັງສິນຄ້າ, ເຄື່ອງຂອງ ໂດຍນໍາໃຊ້ພາຫະນະ ຫຼື ວັດຖຸສິ່ງຂອງເພື່ອຫຼົບຫຼີກພາສີ;
- ການກັກຕຸນ, ເກັບມ້ຽນ ຫຼື ມີໄວ້ໃນຄອບຄອງ ສິນຄ້າ, ເຄື່ອງຂອງ ທີ່ບໍ່ແມ່ນປະເພດ ຈໍາກັດ ຫຼື ຕ້ອງຫ້າມ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ມີເອກະສານຢັ້ງຢືນຢ່າງຖືກ ຕ້ອງຕາມກົດໝາຍ ທີ່ມີຈໍານວນເກີນຄວາມຕ້ອງການຊົມໃຊ້ຂອງຄອບຄົວຕາມລະ ບຽບການທີ່ໄດ້ກໍານົດໄວ້.

ບຸກຄົນໃດໄດ້ກະທໍາຜິດສະຖານເບົາ ລະດັບທີສາມນີ້ ຖືວ່າເປັນການຫຼົບຫຼີກພາສີ ແລະ ຕ້ອງເສຍຄ່າພາສີ ແລະ ພັນທະອື່ນໆຕາມລະບຽບກົດໝາຍໃຫ້ຄົບຖ້ວນ ພ້ອມທັງເສຍຄ່າປັບໃໝ ສອງເທົ່າຂອງຄ່າພາສີ ແລະພັນທະອື່ນໆທີ່ຖືກຫຼົບຫຼີກ; ຖ້າຫາກວ່າເປັນການກະທໍາຜິດລະດັບ ສາມ ຄັ້ງທີສອງຈະຖືກປັບໃໝສາມເທົ່າ.

ສິນຄ້າ, ເຄື່ອງຂອງພ້ອມທັງວັດຖຸສິ່ງຂອງທີ່ນໍາໃຊ້ເພື່ອປິດບັງ ແລະ ພາຫະນະທີ່ຮັບໃຊ້ການກະທໍາຜິດ ຊຶ່ງບໍ່ແມ່ນປະເພດຈໍາກັດ ຫຼື ຕ້ອງຫ້າມ ທີ່ຖືກຍຶດໄວ້ນັ້ນ ຈະຖືກສົ່ງຄືນແກ່ເຈົ້າຂອງພາຍຫຼັງໄດ້ຊໍາລະຄ່າພາສີ ແລະ ພັນທະອື່ນໆ ພ້ອມທັງຄ່າປັບໃໝຢ່າງຄົບຖ້ວນແລ້ວ.

### ມາດຕາ 54. ການກະທໍາຜິດສະຖານໜັກລະດັບທີໜຶ່ງ

ການກະທໍາຜິດສະຖານໜັກລະດັບທີໜຶ່ງ ແມ່ນການສົ່ງອອກ-ນໍາເຂົ້າ, ເຄື່ອນຍ້າຍ ຫຼື ມີໄວ້ໃນການຄອບຄອງ ສິນຄ້າ, ເຄື່ອງຂອງປະເພດຈໍາກັດ ໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ.

ບຸກຄົນໃດໄດ້ກະທໍາຜິດສະຖານໜັກລະດັບທີໜຶ່ງຄັ້ງທີໜຶ່ງ ຈະຖືກປັບໃໝໜຶ່ງເທົ່າຂອງ ຄ່າພາສີ ແລະ ພັນທະອື່ນໆ. ສ່ວນສິນຄ້າ, ເຄື່ອງຂອງທັງໝົດດັ່ງກ່າວ ຈະຕົກເປັນຂອງລັດ.

### ມາດຕາ 55. ການກະທໍາຜິດສະຖານໜັກລະດັບທີສອງ

ການກະທຳຜິດສະຖານໜັກ ລະດັບທີສອງ ແມ່ນການສົ່ງອອກ-ນຳເຂົ້າ, ເຄື່ອນຍ້າຍ ຫຼື ມີໄວ້ໃນຄອບຄອງສິນຄ້າ, ເຄື່ອງຂອງ ປະເພດຈຳກັດ ໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ຊຶ່ງລະ ເມີດເປັນຄັ້ງທີສອງ.

ບຸກຄົນໃດໄດ້ກະທຳຜິດສະຖານໜັກລະດັບທີສອງນີ້ ລັດຖະການພາສີຈະຮ້ອງຟ້ອງຂຶ້ນສານ ແລະ ຈະຖືກປັບໃໝສອງເທົ່າຂອງຄ່າພາສີ ແລະ ພັນທະອື່ນໆ. ສ່ວນສິນຄ້າ, ເຄື່ອງຂອງ, ວັດຖຸສິ່ງຂອງ ແລະ ພາຫະນະທີ່ຮັບໃຊ້ການກະທຳຜິດທັງໝົດ ຈະຕົກເປັນຂອງລັດ.

## ມາດຕາ 56. ການກະທຳຜິດສະຖານໜັກລະດັບທີສາມ

ການກະທຳຜິດສະຖານໜັກລະດັບສາມ ແມ່ນການລັກລອບ ແລະຫຼົບຫຼີກເຊື່ອງອຳການນຳເຂົ້າ ຫຼື ສົ່ງອອກ, ເຄື່ອນຍ້າຍ ຫຼື ມີໄວ້ຄອບຄອງ ສິນຄ້າ, ເຄື່ອງຂອງ ປະເພດຈຳກັດທີ່ລະ ເມີດເປັນຄັ້ງທີສາມ.

ບຸກຄົນໃດໄດ້ກະທຳຜິດສະຖານໜັກລະດັບທີສາມນີ້ ລັດຖະການພາສີຈະຮ້ອງຟ້ອງຂຶ້ນ ສານ ແລະຈະຖືກປັບໃໝສາມເທົ່າຂອງຄ່າພາສີ ແລະພັນທະອື່ນໆ. ສ່ວນສິນຄ້າ, ເຄື່ອງຂອງ, ວັດຖຸສິ່ງຂອງ ແລະ ພາຫະນະທີ່ຮັບໃຊ້ໃນການກະທຳຜິດທັງໝົດຈະຕົກເປັນຂອງລັດ.

## ມາດຕາ 57 ການກະທຳຜິດສຳລັບສິນຄ້າປະເພດຕ້ອງຫ້າມ

ເມື່ອເຈົ້າໜ້າທີ່ພາສີ ຫາກກວດພົບເຫັນ ສິນຄ້າ, ເຄື່ອງຂອງທີ່ຜິດກົດໝາຍ ຊຶ່ງມີລັກສະນະອາຍາທົ່ວໄປເຊັ່ນ: ອາວຸດເສິກ, ຢາຝິ່ນ, ເຮໂລອິນ, ຢາບ້າ ຫຼື ຢາເສບຕິດອື່ນໆ ໃຫ້ເຈົ້າໜ້າທີ່ພາສີດຳເນີນການສືບສວນ-ສອບສວນໃນເບື້ອງຕົ້ນ ແລ້ວສົ່ງສຳນວນພ້ອມດ້ວຍຜູ້ຖືກຫາ ແລະຂອງກາງໃຫ້ເຈົ້າໜ້າທີ່ຕຳຫຼວດສືບສວນ-ສອບສວນ ແລະປະກອບສຳນວນຄະດີສົ່ງໃຫ້ໄອຍະການເພື່ອສັ່ງ ຟ້ອງຂຶ້ນສານ.

# ໝວດທີ 2 ຄວາມຮັບຜິດຊອບໃນການກະທຳຜິດທາງພາສີ

## ມາດຕາ 58. ການຄອບຄອງສິນຄ້າ, ເຄື່ອງຂອງ ແລະ ພາຫະນະຂົນສົ່ງ

ບຸກຄົນໃດຫາກມີສິນຄ້າ, ເຄື່ອງຂອງ ທີ່ຜິດກົດໝາຍ ຫຼື ມີພາຫະນະຂົນສົ່ງຊຶ່ງບັນຈຸສິນຄ້າ, ເຄື່ອງຂອງດັ່ງກ່າວ ຢູ່ໃນການຄອບຄອງຂອງຕົນ ຈະຖືວ່າເປັນຜູ້ຮັບຜິດຊອບຕໍ່ສິນຄ້າ, ເຄື່ອງຂອງ ແລະ ພາຫະນະເຫຼົ່ານັ້ນ.

ຜູ້ຂັບພາຫະນະຂົນສົ່ງທຸກປະເພດ ຈະມີຄວາມຮັບຜິດຊອບທາງພາສີ ແລະ ທາງອາຍາ ກໍຕໍ່ເມື່ອການລະເມີດກົດໝາຍວ່າດ້ວຍພາສີນັ້ນ ເກີດຈາກການກະທຳຂອງຜູ້ກ່ຽວເອງ.

### ມາດຕາ 59. ຄວາມຮັບຜິດຊອບໃນການແຈ້ງພາສີ

ຜູ້ທີ່ໄດ້ສັນຍາກັບເຈົ້າໜ້າທີ່ພາສີ ຕ້ອງປະຕິບັດເນື້ອໃນສັນຍາດັ່ງກ່າວນັ້ນຢ່າງເຂັ້ມງວດ.

ຜູ້ແຈ້ງພາສີຕ້ອງຮັບຜິດຊອບຕໍ່ຄວາມຜິດໃນການແຈ້ງສິນຄ້າ, ເຄື່ອງຂອງຕໍ່ ເຈົ້າໜ້າທີ່ພາສີ.

ໃນກໍລະນີທີ່ມີການປອມແປງໃບແຈ້ງພາສີ ຫຼື ເອກະສານທີ່ກ່ຽວຂ້ອງ ໂດຍມີເຈດຕະນາ ຫຼີກລ້ຽງຄ່າພາສີ ແລະ ພັນທະອື່ນໆຈະຖືກຢຶດສິນຄ້າ, ເຄື່ອງຂອງ ເພື່ອດຳເນີນຄະດີຕາມລະບຽບ ກົດໝາຍ.

ຜູ້ບໍລິການແຈ້ງພາສີ ຕ້ອງຮັບຜິດຊອບຕໍ່ການດຳເນີນທຸລະກິດບໍລິການແຈ້ງພາສີຂອງຕົນ ແລະ ໃນກໍລະນີເກີດມີຄວາມຜິດໃນການປະຕິບັດໜ້າທີ່ຂອງຕົນ ຜູ້ກ່ຽວຕ້ອງຮັບຜິດຊອບທາງແພ່ງ ຫຼື ທາງອາຍາແລ້ວແຕ່ກໍລະນີຂອງການກະທຳຜິດ.

### ມາດຕາ 60. ຄວາມຮັບຜິດຊອບທາງແພ່ງ ແລະ ອາຍາ

ເຈົ້າຂອງສິນຄ້າ, ເຄື່ອງຂອງ ຕ້ອງຮັບຜິດຊອບທາງແພ່ງ ຕາງບຸກຄົນທີ່ປະຕິບັດວຽກງານ ຕາມຄຳສັ່ງຂອງຕົນ ກ່ຽວກັບການແຈ້ງພາສີ, ການເສຍຄ່າພາສີ ແລະ ພັນທະອື່ນໆ ຕາມລະບຽບກົດໝາຍ ລວມທັງສິນຄ້າ, ເຄື່ອງຂອງ ທີ່ຖືກຢຶດ.

ຜູ້ຄ້ຳປະກັນຕ້ອງຮັບຜິດຊອບໃນການເສຍຄ່າພາສີ ແລະ ພັນທະອື່ນໆ ຕາມລະບຽບກົດໝາຍຊຶ່ງຕົກຢູ່ໃນຄວາມຮັບຜິດຊອບຂອງຜູ້ທີ່ຕົນໄດ້ຄ້ຳປະກັນໃຫ້ນັ້ນ.

ພວກທີ່ຖືກຕັດສິນລົງໂທດ ໃນຖານຮ່ວມມືກະທຳຜິດທາງພາສີຕ້ອງຮັບຜິດຊອບທາງອາຍາ ຕາມກໍລະນີເບົາ ຫຼື ໜັກ ແລະຕ້ອງຮັບຜິດຊອບຮ່ວມກັນ ກ່ຽວກັບການເສຍຄ່າພາສີ ແລະ ພັນທະອື່ນໆ, ຄ່າປັບໃໝ ແລະການຮິບສິນຄ້າ, ເຄື່ອງຂອງ ຕາມລະບຽບກົດໝາຍ.

## ພາກທີ X ການດຳເນີນຄະດີທາງພາສີ

## ໝວດທີ 1 ການດຳເນີນການສືບສວນ-ສອບສວນ

### ມາດຕາ 61. ການສືບສວນ-ສອບສວນ

ເມື່ອພົບເຫັນການລະເມີດລະບຽບກົດໝາຍພາສີ ເຈົ້າໜ້າທີ່ພາສີມີສິດຢຶດ ສິນຄ້າ, ເຄື່ອງ ຂອງ ແລະພາຫະນະທີ່ຮັບໃຊ້ການກະທຳຜິດ ພ້ອມທັງເອກະສານທີ່ກ່ຽວຂ້ອງ ເພື່ອສືບສວນ-ສອບ ສວນ ແລະ ເປັນຫຼັກຖານໃນການດຳເນີນຄະດີ.

ໃນກໍລະນີທີ່ພົບເຫັນການກະທຳຜິດເຊິ່ງໜ້າທາງດ້ານພາສີ ເຈົ້າໜ້າທີ່ພາສີ ມີສິດຈັບຕົວຜູ້ລະເມີດ ພ້ອມດ້ວຍສິນຄ້າ, ເຄື່ອງຂອງ ແລະພາຫະນະທີ່ຮັບໃຊ້ການກະທຳຜິດຕາມທີ່ໄດ້ກຳນົດ ໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ໃນກໍລະນີທີ່ພົບເຫັນການກະທຳຜິດເຊິ່ງໜ້າທາງດ້ານພາສີ ເຈົ້າໜ້າທີ່ ຫຼືຜູ້ອື່ນ ກໍມີສິດຈັບ ຕົວຜູ້ຖືກຫາ ພ້ອມດ້ວຍສິນຄ້າ, ເຄື່ອງຂອງ ແລ້ວສົ່ງໃຫ້ເຈົ້າໜ້າທີ່ພາສີໃນທັນໃດ ເພື່ອແກ້ໄຂຄະດີ ຖ້າຫາກແມ່ນການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 55 ແລະ 56 ຂອງກົດໝາຍສະບັບນີ້ ພາຍຫຼັງສືບສວນ-ສອບສວນ ແລະເຮັດຈົດໝາຍບັນທຶກແລ້ວ ເຈົ້າໜ້າທີ່ພາສີ ຈະສົ່ງຜູ້ຖືກຫາ ພ້ອມດ້ວຍຂອງກາງ ແລະສຳນວນຄະດີໃຫ້ໄອຍະການ ເພື່ອພິຈາລະນາສັ່ງ ຟ້ອງຂຶ້ນສານ.

ສຳລັບການກະທຳຜິດສະຖານໜັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 57 ຂອງກົດໝາຍ ສະບັບນີ້ ເຈົ້າໜ້າທີ່ພາສີຕ້ອງມອບຜູ້ຖືກຫາ ພ້ອມດ້ວຍຂອງກາງໃຫ້ເຈົ້າໜ້າທີ່ຕຳຫຼວດ ເພື່ອດຳ ເນີນຄະດີຕໍ່ໄປ.

## ມາດຕາ 62. ການໃຫ້ຄວາມຮ່ວມມື

ໃນເວລາປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ພາສີ ຖ້າມີການຮ້ອງຂໍ ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ມີພັນທະໃຫ້ການຮ່ວມມື, ຊ່ວຍເຫຼືອແກ່ເຈົ້າໜ້າທີ່ພາສີ ໃນການປະຕິບັດ ໜ້າທີ່ ເປັນຕົ້ນແມ່ນໃນການຕິດຕາມ ແລະ ການຢຶດສິນຄ້າ, ເຄື່ອງຂອງທີ່ລະເມີດກົດໝາຍວ່າ ດ້ວຍພາສີ.

## ມາດຕາ 63. ການເຮັດຈົດໝາຍບັນທຶກ

ການເຮັດຈົດໝາຍບັນທຶກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 61 ຂອງກົດໝາຍສະບັບນີ້ຕ້ອງດຳເນີນໃນທັນໃດ ໂດຍເຈົ້າໜ້າທີ່ພາສີຢ່າງໜ້ອຍສອງຄົນຂຶ້ນໄປ.

ຈົດໝາຍບັນທຶກຕ້ອງເຮັດຂຶ້ນຊ້ອງໜ້າຜູ້ຖືກຫາ ແລະມອບໃຫ້ຜູ້ຖືກຫາອ່ານ, ໃນກໍລະນີທີ່ຜູ້ຖືກຫາບໍ່ສາມາດອ່ານໄດ້ ແມ່ນມອບໃຫ້ບຸກຄົນທີ່ສາມອ່ານໃຫ້ຟັງ ແລ້ວຜູ້ຖືກຫາຕ້ອງລົງລາຍເຊັນ ແລະແປະໂປ້ມືໃສ່ຈົດໝາຍບັນທຶກນັ້ນ ພ້ອມກັບເຈົ້າໜ້າທີ່ພາສີ. ໃນກໍລະນີທີ່ຜູ້ຖືກຫາບໍ່ຍອມເຊັນ ຫຼືແປະໂປ້ມືໃສ່ຈົດໝາຍບັນທຶກ ກໍໃຫ້ໝາຍເຫດໄວ້. ຈົດໝາຍບັນທຶກ ເຮັດເປັນສາມສະບັບ ໜຶ່ງສະບັບເກັບໄວ້ສຳນວນຄະດີ, ໜຶ່ງສະບັບມອບໃຫ້ຜູ້ຖືກຫາ ແລະອີກໜຶ່ງສະບັບເກັບ ໄວ້ສຳເນົາ.

ໃນກໍລະນີທີ່ບໍ່ພົບເຫັນຜູ້ຖືກຫານັ້ນ, ພາຍຫຼັງເຮັດຈົດໝາຍບັນທຶກແລ້ວ ເຈົ້າໜ້າທີ່ພາສີ ຕ້ອງຕິດປະກາດໄວ້ຢູ່ຕໍ່ໜ້າຫ້ອງການພາສີ, ປ້ອມພາສີ ຫຼື ຕາມສະຖານທີ່ສາທາລະນະ ພາຍໃນຊາວສີ່ຊົ່ວໂມງເປັນຢ່າງຊ້າ ເພື່ອແຈ້ງໃຫ້ຜູ້ເປັນເຈົ້າຂອງມາຕິດຕາມເອົາສິນຄ້າ, ເຄື່ອງຂອງ ຂອງຕົນນັ້ນ ຄືນພາຍໃນຊາວເອັດວັນ ນັບແຕ່ວັນຕິດປະກາດນັ້ນເປັນຕົ້ນໄປ. ຖ້າກາຍກຳນົດນີ້ແລ້ວ ສິນຄ້າ, ເຄື່ອງຂອງດັ່ງກ່າວ ຈະຖືວ່າເຈົ້າຂອງສະລະສິດ ແລະ ຈະຕົກເປັນຂອງລັດ.

ຈົດໝາຍບັນທຶກການກະທຳຜິດທາງພາສີ ຈະມີຄຸນຄ່າໃຊ້ໄດ້ຈົນກວ່າຈະມີຫຼັກຖານຢັ້ງຢືນວ່າບໍ່ຖືກຕ້ອງ, ສານຈະພິຈາລະນາວ່າຈົດໝາຍບັນທຶກໃດໜຶ່ງເປັນໂມຄະໄດ້ ກໍຕໍ່ເມື່ອການເຮັດຈົດໝາຍບັນທຶກນັ້ນ ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 64. ການເກັບຮັກສາຂອງກາງ

ສິນຄ້າ, ເຄື່ອງຂອງ ແລະ ພາຫະນະຂົນສົ່ງທີ່ຖືກຍຶດເປັນຂອງກາງນັ້ນ ໃຫ້ເຈົ້າໜ້າທີ່ພາສີເປັນຜູ້ປົກປັກຮັກສາໄວ້. ຫ້າມນຳເອົາຂອງກາງໄປໃຊ້, ເຮັດໃຫ້ເປ່ເພ, ຕົກເຮ່ຍເສຍຫາຍ, ສັບປ່ຽນ ຫຼື ຍັກຍອກເອົາ, ຜູ້ລະເມີດຈະຖືກຮັບຜິດຊອບຕາມກົດໝາຍ.

ສຳລັບສິນຄ້າ, ເຄື່ອງຂອງທີ່ເສຍຄຸນນະພາບໄວ ຫຼືບໍ່ເໝາະສົມໃນການຮັກສາໄວ້ ເຈົ້າໜ້າທີ່ພາສີຈະນຳອອກປະມູນຂາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້. ເງິນທີ່ຂາຍໄດ້ນັ້ນ ໃຫ້ເຈົ້າໜ້າທີ່ພາສີຮັກສາໄວ້ຈົນກວ່າການດຳເນີນຄະດີຈະສິ້ນສຸດລົງ.

ຖ້າສິນຄ້າ, ເຄື່ອງຂອງນັ້ນ ຫາກບໍ່ແມ່ນປະເພດຈຳກັດ ເຈົ້າໜ້າທີ່ພາສີ ຈະອະນຸຍາດໃຫ້ເຈົ້າຂອງສິນຄ້າ, ເຄື່ອງຂອງ ແລະ ພາຫະນະຂົນສົ່ງທີ່ຍຶດນັ້ນ ນຳໄປຮັກສາໄວ້ຊົ່ວຄາວ ເພື່ອລໍຖ້າການແກ້ໄຂຄະດີກໍໄດ້ ແຕ່ຕ້ອງມີການຄ້ຳປະກັນຕາມລະບຽບການ.

ໃນກໍລະນີທີ່ແມ່ນສິນຄ້າ, ເຄື່ອງຂອງຕ້ອງຫ້າມ ລັດຖະການພາສີຕ້ອງມອບຂອງກາງ ໃຫ້ ເຈົ້າໜ້າທີ່ຕຳຫຼວດ ເພື່ອດຳເນີນຄະດີຕໍ່ໄປ.

## ໝວດທີ 2 ການສົມຍອມຄະດີ

### ມາດຕາ 65. ການສົມຍອມ

ເຈົ້າໜ້າທີ່ພາສີ ມີສິດແກ້ໄຂຄະດີທາງພາສີ ຕາມການສົມຍອມຂອງຜູ້ກະທຳຜິດ ແລະ ຕາມລະບຽບກົດໝາຍ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກສົມຍອມຊຳລະຄ່າພາສີ ແລະພັນທະອື່ນໆ ພ້ອມທັງຄ່າປັບໃໝ ຕາມຈົດໝາຍບັນທຶກການກະທຳຜິດ ແລ້ວເຈົ້າໜ້າທີ່ພາສີ ຕ້ອງເຮັດບົດບັນທຶກການສົມຍອມຄະດີ ຊຶ່ງຕ້ອງບົ່ງຢ່າງລະອຽດຈະແຈ້ງກ່ຽວກັບເນື້ອໃນ ແລະເງື່ອນໄຂຂອງການສົມຍອມຜູ້ກະທຳຜິດ.

ຄ່າພາສີ ແລະ ພັນທະອື່ນໆ ພ້ອມຄ່າປັບໃໝຕ້ອງຊຳລະໃນທັນໃດ; ໃນກໍລະນີທີ່ບໍ່ສາມາດຊຳລະໃນທັນໃດໄດ້ນັ້ນ ໃຫ້ຊຳລະຢ່າງຊ້າບໍ່ເກີນສິບຫ້າວັນ ນັບແຕ່ວັນເຮັດຈົດໝາຍບັນທຶກການສົມຍອມເປັນຕົ້ນໄປ. ພາຍຫຼັງການຊຳລະແລ້ວ ສິນຄ້າ, ເຄື່ອງຂອງທີ່ບໍ່ແມ່ນປະເພດຈຳກັດ ພ້ອມດ້ວຍພາຫະນະຂົນສົ່ງ ແລະສິ່ງຂອງວັດຖຸທີ່ຮັບໃຊ້ການກະທຳຜິດ ຈະຖືກສົ່ງຄືນແກ່ເຈົ້າຂອງ ຍົກເວັ້ນກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 54, 55, 56 ແລະ 57 ຂອງກົດໝາຍສະບັບນີ້.

### ມາດຕາ 66. ການສະເໜີຕໍ່ລັດຖະການພາສີ

ເຈົ້າຂອງສິນຄ້າ, ເຄື່ອງຂອງ ທີ່ບໍ່ເຫັນດີນຳຄ່າພາສີ ແລະພັນທະອື່ນໆ ພ້ອມທັງຄ່າປັບໃໝທີ່ໄດ້ຊຳລະໄປແລ້ວນັ້ນ ມີສິດສະເໜີຕໍ່ລັດຖະການພາສີ ພາຍໃນກຳນົດສາມເດືອນ ນັບແຕ່ວັນທີ່ໄດ້ຍຶດສິນຄ້າ, ເຄື່ອງຂອງ ແລະວັນຈົດເນື້ອໃນຂອງຄະດີເຂົ້າ

ປື້ມບັນທຶກ ຫຼື ວັນທີ່ໄດ້ຊຳລະ ຄ່າພາສີ ແລະ ພັນທະອື່ນໆ ເປັນຕົ້ນໄປ ເພື່ອຂໍເບິ່ງເອກະສານ ຫຼື ໃຫ້ລັດຖະການພາສີພິຈາລະ ນາຄືນຕາມລະບຽບກົດໝາຍ.

## ໝວດທີ 3 ການຮ້ອງຟ້ອງ

### ມາດຕາ 67 ສິດໃນການຮ້ອງຟ້ອງ

ເຈົ້າໜ້າທີ່ພາສີ ມີສິດຮ້ອງຟ້ອງຜູ້ລະເມີດຕໍ່ສານ ໃນກໍລະນີດັ່ງນີ້ :

1. ບໍ່ເສຍຄ່າພາສີ ແລະ ພັນທະອື່ນໆ ພ້ອມດ້ວຍຄ່າປັບໃໝ;
2. ບໍ່ປະຕິບັດຕາມຈົດໝາຍບັນທຶກການລົມຍອມ;
3. ບໍ່ໃຫ້ການຮ່ວມມື, ໝິ່ນປະໝາດ, ນາບຂູ່, ຂັດຂວາງ ແລະ ທຳຮ້າຍຮ່າງກາຍເຈົ້າໜ້າ ທີ່ພາສີ;
4. ບໍ່ປະຕິບັດຕາມສັນຍາ ຫຼື ຂໍ້ຕົກລົງການຄ້ຳປະກັນ;
5. ບໍ່ປະຕິບັດຕາມກົດໝາຍວ່າດ້ວຍພາສີ;
6. ມີການກະທຳຜິດທາງອາຍາອື່ນໆ.

### ມາດຕາ 68. ການຍື່ນຄຳຮ້ອງຟ້ອງ

ໃນການຮ້ອງຟ້ອງ ເຈົ້າໜ້າທີ່ພາສີຕ້ອງປະກອບສຳນວນຄະດີຍື່ນຕໍ່ໄອຍະການ ຫຼື ສານ. ສຳນວນຄະດີຕ້ອງປະກອບດ້ວຍ: ຄຳຮ້ອງ, ບົດບັນທຶກສືບສວນ-ສອບສວນ ແລະ ເອກະສານອື່ນໆທີ່ຈຳເປັນ. ເນື້ອໃນຂອງຄຳຮ້ອງຕ້ອງບອກການກະທຳຜິດຂອງຜູ້ລະເມີດໂດຍສັງເຂບ, ຂໍ້ກ່າວຫາ, ມາດຕາກົດໝາຍທີ່ຖືກລະເມີດ ແລະ ຈຸດປະສົງຂອງການຮ້ອງຟ້ອງ.

ໃນການຮ້ອງຟ້ອງ ຫຼື ການດຳເນີນຄະດີທາງພາສີຕ້ອງສອດຄ່ອງກັບກົດໝາຍວ່າດ້ວຍ ການດຳເນີນຄະດີທາງອາຍາ ຫຼື ທາງແພ່ງ.

### ມາດຕາ 69. ການຖອນຄຳຮ້ອງຟ້ອງ

ໃນກໍລະນີທີ່ມີການລົມຍອມຄະດີຂອງຜູ້ລະເມີດ ລັດຖະການພາສີມີສິດຂໍຖອນຄຳຮ້ອງ ຟ້ອງ ກ່ອນຄຳຕັດສິນໃຊ້ໄດ້ຢ່າງເດັດຂາດຂອງສານ.

## ພາກທີ XI ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານພາສີ.

## ໝວດທີ 1 ການຈັດຕັ້ງພາສີ

### ມາດຕາ 70. ທີ່ຕັ້ງ ແລະ ພາລະບົດບາດ

ລັດຖະການພາສີ ເປັນການຈັດຕັ້ງໜຶ່ງທີ່ຂຶ້ນກັບ ກະຊວງການເງິນ, ມີພາລະບົດບາດ ໃນການຄຸ້ມຄອງ, ກວດກາວຽກງານພາສີໃນທົ່ວປະເທດ ເພື່ອຈັດເກັບພາສີ ແລະ

ພັນທະອື່ນໆເຂົ້າງົບປະມານແຫ່ງລັດຢ່າງລວມສູນເປັນເອກະພາບ ຕາມຂະແໜງການວິຊາ ສະເພາະສາຍຕັ້ງ.

### ມາດຕາ 71. ໂຄງປະກອບການຈັດຕັ້ງ

ໂຄງປະກອບການຈັດຕັ້ງຂອງລັດຖະການພາສີ ມີດັ່ງນີ້ :

- ກົມພາສີ;
- ຫ້ອງການພາສີປະຈຳແຂວງ, ນະຄອນ ແລະ ເຂດພິເສດ;
- ດ່ານພາສີຊາຍແດນ;
- ໜ່ວຍພາສີເຄື່ອນທີ່;
- ປ້ອມພາສີ.

### ມາດຕາ 72. ສິດ ແລະ ໜ້າທີ່ຂອງລັດຖະການພາສີ

ລັດຖະການພາສີແຕ່ລະຂັ້ນມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ກົມພາສີ :

- ເປັນເສນາທິການໃຫ້ກະຊວງການເງິນ ໃນການຄົ້ນຄວ້ານະໂຍບາຍກ່ຽວກັບ ພາສີ ເພື່ອນຳສະເໜີໃຫ້ລັດຖະບານ ພິຈາລະນາ;
- ຈັດຕັ້ງຜັນຂະຫຍາຍ, ໂຄສະນາເຜີຍແຜ່ກົດໝາຍ, ມະຕິຄຳສັ່ງ ແລະນະໂຍບາຍ ຕ່າງໆ ກ່ຽວກັບວຽກງານພາສີ ເພື່ອຍົກສູງຄວາມຮັບຮູ້, ຄວາມຕື່ນຕົວໃນການປະຕິບັດລະ ບຽບກົດໝາຍ ເຮັດໃຫ້ທຸກຄົນ, ທຸກການຈັດຕັ້ງ ຢູ່ໃນສັງຄົມ ເປັນຕົ້ນ ຜູ້ສົ່ງອອກ-ນຳເຂົ້າ ເຂົ້າໃຈທາດແທ້ອັນດີງາມ ແລະຜົນປະໂຫຍດລວມ, ຈາກນັ້ນ ຈຶ່ງໃຫ້ຄວາມຮ່ວມມືຢ່າງຕັ້ງໜ້າໃຫ້ແກ່ວຽກງານພາ ສີ;
- ຊີ້ນຳ ນຳພາ, ຕິດຕາມ, ກວດກາກວດການ ການຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍພາສີ ແລະລະບຽບການຄຸ້ມຄອງການສົ່ງອອກ-ນຳເຂົ້າ, ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ສະກັດກັ້ນການລັກລອບຫຼົບຫຼີກໜີພາສີ ແລະສິນຄ້າຕ້ອງຫ້າມ;
- ຄຸ້ມຄອງ, ກວດກາວຽກງານວິຊາສະເພາະ ແລະ ພະນັກງານພາສີ;
- ຄົ້ນຄວ້າ, ແກ້ໄຂຄຳສະເໜີຂອງຜູ້ສົ່ງອອກ-ນຳເຂົ້າ;
- ດຳເນີນ ແລະແກ້ໄຂຄະດີທາງພາສີ;
- ເກັບກຳ ແລະສະໜອງຂໍ້ມູນສະຖິຕິການສົ່ງອອກ-ນຳເຂົ້າ, ສະຫຼຸບ ແລະລາຍງານ ກ່ຽວກັບວຽກງານພາສີໃຫ້ກະຊວງການເງິນ;
- ສະເໜີແຜນການ ບຳລຸງ, ກໍ່ສ້າງ, ຈັດວາງ, ແຕ່ງຕັ້ງ, ຍົກຍ້າຍ, ສັບຊ້ອນໝູນວຽນ, ປະຕິບັດນະໂຍບາຍເລື່ອນຊັ້ນ, ເລື່ອນຂັ້ນ, ປົດຕຳແໜ່ງພະນັກງານພາຍໃນກົມ, ຫົວໜ້າ, ຮອງຫົວໜ້າພະແນກຂອງກົມ; ຫົວໜ້າ, ຮອງຫົວໜ້າຫ້ອງ

ການພາສີປະຈຳແຂວງ; ຫົວໜ້າດ່ານພາສີສາກົນ, ບິນພື້ນຖານປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

- ພົວພັນ ແລະຮ່ວມມືກັບຂະແໜງການຂັ້ນສູນກາງ ແລະອົງການປົກຄອງທ້ອງຖິ່ນ;

- ພົວພັນ ແລະ ຮ່ວມມືກັບສາກົນ ຕາມການມອບໝາຍ;

- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

2. ຫ້ອງການພາສີປະຈຳແຂວງ, ນະຄອນ ແລະ ເຂດພິເສດ :

ຫ້ອງການພາສີປະຈຳແຂວງ, ນະຄອນ ແລະເຂດພິເສດ ແມ່ນຕັ້ງຂຶ້ນສະເພາະແຕ່ ບ່ອນທີ່ມີດ່ານພາສີຊາຍແດນເທົ່ານັ້ນ. ສຳລັບບ່ອນທີ່ບໍ່ມີດ່ານພາສີຊາຍແດນ ຈະໂຮມເຂົ້າເປັນຫ້ອງການພາສີດຽວ ຊຶ່ງກະຊວງການເງິນຈະເປັນຜູ້ກຳນົດລະອຽດ.

- ເປັນເສນາທິການໃຫ້ກົມພາສີ ໃນການຈັດຕັ້ງປະຕິບັດຍຸດທະສາດ, ນະໂຍບາຍ ແລະກົນໄກຄຸ້ມຄອງວຽກງານພາສີຢູ່ໃນທ້ອງຖິ່ນຂອງຕົນ ຕາມລະບຽບກົດໝາຍວ່າດ້ວຍ ພາສີ ແລະກົດໝາຍອື່ນໆ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ;

- ຊີ້ນຳ, ຄຸ້ມຄອງ, ສ້າງແຜນການ, ຄິດໄລ່, ຈັດເກັບພາສີ ແລະພັນທະອື່ນໆໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຢ່າງຖືກຕ້ອງ, ຄົບຖ້ວນ, ທັນຕາມກຳນົດເວລາ;

- ຄົ້ນຄວ້າ, ແກ້ໄຂຄຳສະເໜີຂອງຜູ້ສົ່ງອອກ-ນຳເຂົ້າ;

- ດຳເນີນ ແລະແກ້ໄຂຄະດີທາງພາສີ;

- ຄຸ້ມຄອງ ແລະ ກວດກາການປະຕິບັດໜ້າທີ່ຂອງລັດຖະການພາສີ ທີ່ຂຶ້ນກັບ ຄວາມຮັບຜິດຊອບຂອງຕົນ;

- ໂຄສະນາເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ ທີ່ກ່ຽວພັນກັບ ວຽກງານພາສີ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ໜ້າທີ່ວຽກ ງານຂອງຕົນ;

- ສະເໜີ ແຜນການບຳລຸງ, ກໍ່ສ້າງ, ຈັດວາງ, ແຕ່ງຕັ້ງ, ຍົກຍ້າຍ, ສັບຊ້ອນໝູນວຽນ, ປະຕິບັດນະໂຍບາຍເລື່ອນຊັ້ນ, ເລື່ອນຂັ້ນ, ປົດຕຳແໜ່ງພະນັກງານ ພາຍໃຕ້ຄວາມ ຮັບຜິດຊອບຂອງຕົນ, ຫົວໜ້າ, ຮອງຫົວໜ້າໜ່ວຍງານຂອງ ຫ້ອງການພາສີ, ຮອງຫົວ ໜ້າດ່ານພາສີສາກົນ, ຫົວໜ້າ, ຮອງຫົວໜ້າດ່ານພາສີທ້ອງຖິ່ນ, ບົນພື້ນຖານປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

- ຕິດຕາມ, ກວດກາ, ປະເມີນຜົນ ແລະລາຍງານ ເຈົ້າແຂວງ, ເຈົ້າຄອງນະຄອນ ຫຼື ຫົວໜ້າເຂດພິເສດ, ກະຊວງການເງິນ ແລະພະແນກການເງິນຂັ້ນແຂວງ ກ່ຽວກັບການຈັດ ຕັ້ງປະຕິບັດວຽກງານພາສີໃນທ້ອງຖິ່ນຂອງຕົນ;

- ສະຫຼຸບ, ປະເມີນຜົນ ແລະລາຍງານວຽກງານຂອງຕົນ ຕໍ່ການຈັດຕັ້ງຂັ້ນເທິງຂອງຕົນ;

- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

3. ດ່ານພາສີຊາຍແດນ :

- ຈັດຕັ້ງປະຕິບັດແຜນການ, ນະໂຍບາຍ, ລະບຽບກົດໝາຍ ໂດຍສະເພາະກົດໝາຍ ວ່າດ້ວຍພາສີ ໃນຂອບເຂດດ່ານພາສີຂອງຕົນ;

- ຈັດເກັບພາສີ ແລະ ພັນທະອື່ນໆ ຢ່າງຖືກຕ້ອງ, ຄົບຖ້ວນ ແລະທັນຕາມກຳນົດເວລາ;

- ບໍລິການ, ອຳນວຍຄວາມສະດວກແກ່ການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງຢ່າງວ່ອງໄວ, ໂປ່ງໃສ ແລະຖືກຕ້ອງຕາມລະບຽບກົດໝາຍ;

- ຄຸ້ມຄອງ, ຕິດຕາມ, ກວດກາ ການນຳເຂົ້າ-ສົ່ງອອກສິນຄ້າ, ເຄື່ອງຂອງຜ່ານດ່ານ;

- ສະກັດກັ້ນທຸກການລະເມີດລະບຽບກົດໝາຍ ກ່ຽວກັບພາສີ ພາຍໃນຂອບເຂດດ່ານ ແລະດຳເນີນຄະດີຕໍ່ຜູ້ລະເມີດ;

- ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງໃນຂອບເຂດດ່ານ ແລະອົງການປົກຄອງທ້ອງຖິ່ນ ເພື່ອຄວາມເປັນເອກະພາບ ໃນການປະຕິບັດ ໜ້າທີ່;

- ສະຫຼຸບ, ປະເມີນຜົນ ແລະລາຍງານວຽກງານຂອງຕົນ ຕໍ່ການຈັດຕັ້ງຂັ້ນເທິງຂອງຕົນ;

- ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງລັດຖະການພາສີ.

4. ໜ່ວຍພາສີເຄື່ອນທີ່

- ຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບພາສີ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງຢ່າງ ເຂັ້ມງວດ;

- ກວດກາລາດຕະເວນຢ່າງປົກກະຕິ ເພື່ອສະກັດກັ້ນ ແລະປາບປາມການລັກລອບສິນຄ້າໜີພາສີ ແລະການຄ້າຂາຍເຖື່ອນ ໃນວົງລັດສະໝີການເຄື່ອນໄຫວຂອງຕົນ;

- ຢຶດສິນຄ້າ, ເຄື່ອງຂອງ ແລະ ພາຫະນະທີ່ຮັບໃຊ້ໃນການກະທຳຜິດ ເພື່ອເປັນຫຼັກ ຖານໃນການສືບສວນ-ສອບສວນ ແລະ ຂະຫຍາຍຜົນໃນການດຳເນີນຄະດີ ແລະ ລາຍ ງານໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ;

- ຊອກຮູ້ ແລະເກັບກຳຂໍ້ມູນແຫຼ່ງຂ່າວກ່ຽວກັບການລັກລອບ ແລະ ການຄ້າຂາຍເຖື່ອນ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໃນການ ເຄື່ອນໄຫວວຽກງານຂອງຕົນ;

- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

5. ປ້ອມພາສີ

- ຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບພາສີ ແລະກົດໝາຍອື່ນໆ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ;

- ຕິດຕາມ ແລະ ສ້າງພື້ນຖານໃນການເກັບກຳຂໍ້ມູນ ແລະແຫຼ່ງຂ່າວ ກ່ຽວກັບການລັກ ລອບ, ຫຼົບຫຼີກພາສີ ແລະ ການຄ້າຂາຍເຖື່ອນ;

- ກວດກາລາດຕະເວນ ໃນວົງລັດສະໝີການເຄື່ອນໄຫວຂອງຕົນ;

- ຢຶດສິນຄ້າ, ເຄື່ອງຂອງ ແລະ ພາຫະນະທີ່ຮັບໃຊ້ໃນການກະທຳຜິດ ເພື່ອເປັນຫຼັກ ຖານໃນການສືບສວນ-ສອບສວນ ແລະ ລາຍງານໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການ ເຄື່ອນໄຫວວຽກງານຂອງຕົນ;

- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ມາດຕາ 73. ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນຂອງລັດຖະການພາສີ ມີດັ່ງນີ້ :

- ຫົວໜ້າກົມ, ຮອງຫົວໜ້າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ຂອງກົມ; ຫົວໜ້າ, ຮອງຫົວໜ້າໜ່ວຍງານຂອງພະແນກ;
- ຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການພາສີປະຈຳແຂວງ, ນະຄອນ ແລະ ເຂດພິເສດ; ຫົວໜ້າ, ຮອງຫົວໜ້າໜ່ວຍງານຂອງຫ້ອງການ;
- ຫົວໜ້າ, ຮອງຫົວໜ້າດ່ານພາສີຊາຍແດນ;
- ຫົວໜ້າ, ຮອງຫົວໜ້າໜ່ວຍພາສີເຄື່ອນທີ່;
- ຫົວໜ້າ, ຮອງຫົວໜ້າປ້ອມພາສີ;
- ພະນັກງານວິຊາການ ແລະ ພະນັກງານຊ່ວຍວຽກ.

ສຳລັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງບຸກຄະລາກອນແຕ່ລະຂັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍລັດຖະບານ, ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແລະລະບຽບການຕ່າງໆ ທີ່ ລັດຖະບານກຳນົດ.

## ມາດຕາ 74. ມາດຖານຂອງພະນັກງານພາສີ

ພະນັກງານພາສີຕ້ອງມີປະຫວັດຈະແຈ້ງ, ມີຄວາມຈົ່ງຮັກພັກດີ, ເປັນເອກະພາບກັບແນວ ທາງນະໂຍບາຍ ແລະ ລະບຽບກົດໝາຍຂອງລັດ, ມີຄຸນສົມບັດດີ, ມີຄວາມສັດຊື່ບໍລິສຸດ, ມີແບບ ແຜນດຳລົງຊີວິດທີ່ປອດໃສ, ບໍ່ເຄີຍຍັກຍອກ, ສໍ້ໂກງ, ຫລັກໂລບ, ມີສະຕິຕໍ່ການຈັດຕັ້ງ, ລະບຽບວິໄນ, ມີຄວາມສາມັກຄີ, ມີຄວາມຍຸຕິທຳ, ເປັນຄົນດຸໝັ່ນ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ, ມັກຄົ້ນຄ້ວາຮ່ຳຮຽນ, ມີສຸຂະພາບແຂງແຮງດີ, ມີຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະພາສີ, ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ ໃນລະດັບອັນແນ່ນອນ.

### ມາດຕາ 75. ການຮັກສາຄວາມລັບທາງລັດຖະການ

ພະນັກງານພາສີ ທີ່ປະຕິບັດໜ້າທີ່ ຫຼື ຖືກແຕ່ງຕັ້ງໃຫ້ປະຕິບັດໜ້າທີໃດໜຶ່ງ ຕ້ອງຮັກສາຄວາມລັບທາງລັດຖະການ ຢ່າງເຂັ້ມງວດ.

## ໝວດທີ 2 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ພາສີ

### ມາດຕາ 76. ສິດຂອງເຈົ້າໜ້າທີ່ພາສີ

ເຈົ້າໜ້າທີ່ພາສີ ມີສິດດັ່ງຕໍ່ໄປນີ້ :

1. ກວດຄົ້ນຕົວບຸກຄົນ, ສິນຄ້າ, ເຄື່ອງຂອງ, ຍານພາຫະນະ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນຂອງບຸກຄົນ ບໍ່ວ່າໃນເວລາກາງເວັນ ຫຼື ກາງຄືນໃນກໍລະນີທີ່ສົງໃສມີການລະເມີດລະບຽບກົດໝາຍກ່ຽວກັບພາສີ;
2. ສັ່ງໃຫ້ຜູ້ຂັບຂີ່ຍານພາຫະນະຢຸດ ເພື່ອທຳການກວດຄົ້ນໃນກໍລະນີທີ່ມີການສົງໃສມີການລະເມີດລະບຽບກົດໝາຍກ່ຽວກັບພາສີ;
3. ນຳໃຊ້ວິທີການອັນເໝາະສົມ ແລະ ເຄື່ອງມືອັນຈຳເປັນທີ່ທາງລັດຖະການໄດ້ປະກອບໃຫ້ ເພື່ອບັງຄັບໃຫ້ຍານພາຫະນະຂົນສົ່ງນັ້ນຢຸດ ໃນກໍລະນີທີ່ຜູ້ຂັບຂີ່ຫາກບໍ່ປະຕິບັດ ຕາມຄຳສັ່ງ;
4. ເຂົ້າສະຖານທີ່ດຳເນີນທຸລະກິດ ແລະ ສາງ ເພື່ອກວດກາສິນຄ້າ, ເຄື່ອງຂອງພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ກ່ຽວກັບການສົ່ງອອກ-ນຳເຂົ້າ ແຕ່ຕ້ອງໄດ້ຮັບໝາຍ ກວດຄົ້ນຈາກໄອຍະການປະຊາຊົນ;
5. ຕິດຕາມ ແລະ ກຳກັບການຄ່ຽນຖ່າຍສິນຄ້າ, ເຄື່ອງຂອງທີ່ເຫັນວ່າມີຄວາມຈຳເປັນ;
6. ກວດກາໄປສະນີພັນທີ່ສົງໃສໂດຍຊ້ອງໜ້າພະນັກງານໄປສະນີ ໂດຍສອດຄ່ອງກັບລະບຽບກົດໝາຍຂອງ ສ.ປ.ປ.ລາວ ແລະ ຂໍ້ກຳນົດຂອງສົນທິສັນຍາສະຫະພັນໄປສະນີສາກົນ;
7. ກວດຄົ້ນເຄຫະສະຖານ ເພື່ອຊອກຫາສິນຄ້າ, ເຄື່ອງຂອງໜີພາສີ ໃນກໍລະນີທີ່ສິນຄ້າ, ເຄື່ອງຂອງນັ້ນ ຫາກຖືກໄລ່ຕິດຕາມຢ່າງບໍ່ຂາດໄລຍະ;
8. ຖື ແລະນຳໃຊ້ອາວຸດ, ອຸປະກອນ ແລະພາຫະນະຕ່າງໆ ຕາມລະບຽບການສະ ເພາະ;
9. ຮ້ອງຂໍການຊ່ວຍເຫຼືອໃນກໍລະນີທີ່ຈຳເປັນ ຈາກພາກສ່ວນທີ່ກ່ຽວຂ້ອງ, ອົງການປົກຄອງ, ກຳລັງປະກອບອາວຸດ ແລະປະຊາຊົນ ໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ຕາມລະບຽບກົດໝາຍ;
10. ກວດກາ, ຢຶດສິນຄ້າ, ເຄື່ອງຂອງ ທີ່ເຫັນວ່າມີການລະເມີດຊັບສິນທາງປັນຍາ ແລະ ສົນທິສັນຍາວ່າດ້ວຍການຫ້າມຊື້-ຂາຍພືດພັນ ແລະ ສັດປ່າ ໃກ້ສູນພັນໂດຍສອດ ຄ່ອງກັບລະບຽບກົດໝາຍ;

11. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ;
12. ປະຕິບັດສິດອື່ນໆ ຕາມລະບຽບກົດໝາຍ.

## ມາດຕາ 77 . ໜ້າທີ່ຂອງເຈົ້າໜ້າທີ່ພາສີ

ເຈົ້າໜ້າທີ່ພາສີ ມີໜ້າທີ່ດັ່ງນີ້ :

1. ຈັດຕັ້ງປະຕິບັດລະບຽບກົດໝາຍພາສີ ແລະກົດໝາຍອື່ນໆທີ່ກ່ຽວຂ້ອງຢ່າງເຂັ້ມງວດ;
2. ຈັດຕັ້ງເກັບຄ່າພາສີ ແລະພັນທະອື່ນໆ ຢ່າງຖືກຕ້ອງ, ຄົບຖ້ວນ ທັນຕາມກຳນົດເວລາ;
3. ໂຄສະນາ, ເຜີຍແຜ່, ໃຫ້ຄຳແນະນຳແກ່ສັງຄົມ ໂດຍສະເພາະຜູ້ສົ່ງອອກ-ນຳເຂົ້າ ເພື່ອຍົກສູງຄວາມຮັບຮູ້, ຄວາມຕື່ນຕົວ ແລະເຂົ້າຮ່ວມ, ຊ່ວຍເຫຼືອ ໃນການປະຕິບັດ ເສຍພາສີ ແລະ ພັນທະອື່ນໆ;
4. ກຳນົດມາດຕະການເພື່ອສະກັດກັ້ນ ແລະ ປາບປາມບັນດາການເຄື່ອນໄຫວກ່ຽວກັບ ການລັກລອບຫຼົບຫຼີກພາສີ ດ້ວຍຮູບການຕ່າງໆ;
5. ປົກປັກຮັກສາຄວາມລັບຂອງລັດ ແລະຄວາມລັບຂອງລັດຖະການ;
6. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ຮັບມອບໝາຍ.

## ມາດຕາ 78. ການເຄື່ອນໄຫວໃນວົງລັດສະໝີ

ວົງລັດສະໝີພາສີ ແມ່ນເຂດຄວບຄຸມກວດກາຂອງເຈົ້າໜ້າທີ່ພາສີ ທາງໜ້າດິນຈາກ ຊາຍແດນເລິກເຂົ້າໄປໃນອານາເຂດພາສີ ເຖິງສາມສິບກິໂລແມັດ. ໃນກໍລະນີທີ່ມີການຕັ້ງຫ້ອງ ການພາສີ ຢູ່ນອກວົງລັດສະໝີພາສີ ການເຄື່ອນໄຫວ ແມ່ນ ກຳນົດເອົາສິບກິໂລແມັດ ອ້ອມຮອບ ຫ້ອງການພາສີ.

ເພື່ອອຳນວຍຄວາມສະດວກໃຫ້ແກ່ການສະກັດກັ້ນ ແລະປາບປາມການລັກລອບ, ການຄ້າຂາຍເຖື່ອນ ແລະການລະເມີດລະບຽບກົດໝາຍພາສີນັ້ນ ກະຊວງການເງິນມີສິດ ອອກລະບຽບການ ເພື່ອຂະຫຍາຍວົງລັດສະໝີພາສີອອກຕື່ມ ຈາກສາມສິບກິໂລແມັດເປັນຫ້າ ສິບກິໂລ ແມັດ ແລະອ້ອມຮອບຫ້ອງການພາສີຈາກ ສິບກິໂລແມັດເປັນຊາວກິໂລແມັດ ໃນຈຸດທີ່ຕັ້ງສະເພາະ ແລະໃນກຳນົດເວລາໃດໜຶ່ງ.

## ມາດຕາ 79. ການເຄື່ອນໄຫວນອກວົງລັດສະໝີ

ໃນກໍລະນີທີ່ມີການຕິດຕາມຢ່າງເຄັ່ງຮ້ອນ ກ່ຽວກັບການລັກລອບຫຼົບຫຼີກພາສີໂດຍມີຂໍ້ ມູນໜັກແໜ້ນນັ້ນ ເຈົ້າໜ້າທີ່ພາສີມີສິດປະຕິບັດໜ້າທີ່ຂອງຕົນ ໃນທົ່ວອານາເຂດພາສີ ຕາມທີ່ ໄດ້ກຳນົດໄວ້ໃນມາດຕາ 5 ແລະ 78 ຂອງກົດໝາຍສະບັບນີ້.

### ມາດຕາ 80. ເຄື່ອງແບບ ແລະກາໝາຍ

ລັດຖະການພາສີມີເຄື່ອງແບບ ແລະກາໝາຍສະເພາະຂອງຕົນ. ໃນເວລາປະຕິບັດໜ້າ ທີ່ ພະນັກງານພາສີ ໂດຍສະເພາະເຈົ້າໜ້າທີ່ພາສີ ຕ້ອງນຸ່ງເຄື່ອງແບບ, ຕິດກາໝາຍສະເພາະ ແລະ ຖືບັດປະຈຳໜ້າທີ່ ຊຶ່ງໄດ້ຮັບການອະນຸມັດຈາກລັດຖະບານ.

ໃນບາງກໍລະນີທີ່ຈຳເປັນ ເຈົ້າໜ້າທີ່ພາສີ ຈະປະຕິບັດໜ້າທີ່ນອກເຄື່ອງແບບກໍໄດ້ ແຕ່ຕ້ອງ ສະເໜີບັດປະຈຳໜ້າທີ່ຕໍ່ຜູ້ຖືກກວດກາ.

## ພາກທີ XII ການຄຸ້ມຄອງ ແລະ ກວດກາວຽກງານພາສີ

## ໝວດທີ 1 ອົງການຄຸ້ມຄອງວຽກງານພາສີ

### ມາດຕາ 81. ອົງການຄຸ້ມຄອງວຽກງານພາສີ

ອົງການຄຸ້ມຄອງວຽກງານພາສີປະກອບດ້ວຍ :

- ກະຊວງການເງິນ;
- ພະແນກການເງິນຂັ້ນແຂວງ;
- ຫ້ອງການການເງິນຂັ້ນເມືອງ.

### ມາດຕາ 82. ສິດ ແລະ ໜ້າທີ່ ຂອງ ກະຊວງການເງິນ

ກະຊວງການເງິນ ມີສິດ ແລະ ໜ້າທີ່ໃນການຄຸ້ມຄອງວຽກງານພາສີ ດັ່ງນີ້ :

- ຄົ້ນຄວ້າຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍ ແລະແຜນການ ກ່ຽວກັບ ການພັດທະນາວຽກງານພາສີ ເພື່ອສະເໜີລັດຖະບາຍພິຈາລະນາ;
- ອອກລະບຽບການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະແຈ້ງການ ກ່ຽວກັບວຽກງານພາສີ;
- ຊີ້ນຳ, ຕິດຕາມ, ກວດກາ ການປະຕິບັດແຜນການເກັບພາສີໃນທົ່ວປະເທດ;
- ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍກ່ຽວກັບພາສີ ແລະກົດໝາຍ ອື່ນໆ ທີ່ກ່ຽວຂ້ອງ;
- ປະສານສົມທົບກັບບັນດາຂະແໜງການຂັ້ນສູນກາງ ແລະທ້ອງຖິ່ນ, ຊີ້ນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍພາສີ;
- ສະຫຼຸບ ແລະລາຍງານໃຫ້ລັດຖະບານ ແລະ ສະພາແຫ່ງຊາດ ກ່ຽວກັບວຽກງານພາສີ;
- ຍ້ອງຍໍຜູ້ທີ່ມີຜົນງານ ແລະ ປະຕິບັດວິໄນ ຕໍ່ຜູ້ລະເມີດລະບຽບກົດໝາຍ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 83. ສິດ ແລະ ໜ້າທີ່ຂອງ ພະແນກການເງິນຂັ້ນແຂວງ

ພະແນກການເງິນຂັ້ນແຂວງ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງວຽກງານພາສີ ດັ່ງນີ້ :

- ຊີ້ນຳ, ແນະນຳຫ້ອງການ ແລະ ພະນັກງານພາສີປະຈຳແຂວງ, ນະຄອນ ແລະເຂດ ພິເສດ, ຈັດຕັ້ງຄຸ້ມຄອງເກັບພາສີ ແລະ ພັນທະອື່ນໆ ເຂົ້າງົບປະມານແຫ່ງລັດ ຢ່າງເປັນເອກະພາບ ແລະ ຖືກຕ້ອງ, ຄົບຖ້ວນ ທັນກຳນົດເວລາຕາມລະບຽບກົດໝາຍ;
- ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍພາສີ ແລະລະບຽບ ກົດໝາຍ ອື່ນໆ ທີ່ກ່ຽວຂ້ອງ;
- ກວດກາການປະຕິບັດໜ້າທີ່ ຂອງພະນັກງານພາສີ ໃຫ້ຖືກຕ້ອງຕາມລະ ບຽບກົດໝາຍ;
- ແນະນຳການປະຕິບັດລະບອບບັນຊີ, ສະຖິຕິ ແລະ ລະບອບລາຍງານລາຍ ຮັບພາສີໃຫ້ຂັ້ນເທິງຢ່າງເປັນປະຈຳ;
- ສະຫຼຸບ, ປະເມີນຜົນ ແລະ ລາຍງານໃຫ້ອົງການປົກຄອງທ້ອງຖິ່ນ ແລະ ກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານພາສີ ຢູ່ໃນທ້ອງ ຖິ່ນຂອງຕົນ;
- ຍ້ອງຍໍຜູ້ທີ່ມີຜົນງານ ແລະ ສະເໜີປະຕິບັດວິໄນ ຕໍ່ຜູ້ລະເມີດລະບຽບ ກົດໝາຍ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 84. ສິດ ແລະ ໜ້າທີ່ຂອງຫ້ອງການ ການເງິນຂັ້ນເມືອງ

ຫ້ອງການການເງິນຂັ້ນເມືອງ ມີສິດ ແລະ ໜ້າທີ່ໃນການຄຸ້ມຄອງວຽກງານພາສີ ດັ່ງນີ້ :

- ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍພາສີ ແລະກົດໝາຍ ອື່ນໆທີ່ ກ່ຽວຂ້ອງ;
- ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານອົງການປົກຄອງເມືອງ ຫຼື ເທດສະບານ ແລະ ພະແນກການເງິນຂັ້ນແຂວງ ກ່ຽວກັບການຈັດຕັ້ງ ປະຕິບັດວຽກງານພາສີໃນທ້ອງຖິ່ນຂອງຕົນ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2 ການກວດກາວຽກງານພາສີ

### ມາດຕາ 85. ອົງການກວດກາວຽກງານພາສີ

ອົງການກວດກາວຽກງານພາສີປະກອບດ້ວຍ: ອົງການກວດກາພາຍໃນ ແລະ ອົງການ ກວດກາພາຍນອກ.

1. ອົງການກວດກາພາຍໃນ ມີດັ່ງນີ້ :

- ກະຊວງການເງິນ, ກົມພາສີ, ກົມກວດກາການເງິນ;
- ພະແນກການເງິນ, ຫ້ອງການພາສີ, ຫ້ອງການກວດກາການເງິນ ຂັ້ນແຂວງ;
- ຫ້ອງການການເງິນຂັ້ນເມືອງ.

2. ອົງການກວດກາພາຍນອກ ມີດັ່ງນີ້ :

- ອົງການກວດກາລັດ;
- ອົງການກວດສອບບັນຊີແຫ່ງລັດ.

ນອກຈາກອົງການທີ່ກ່າວມາຂ້າງເທິງນີ້ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະພາກສ່ວນທີ່ກ່ຽວຂ້ອງອື່ນໆ ຕ້ອງມີສ່ວນຮ່ວມໃນການກວດກາ ຕາມພາລະບົດບາດຂອງຕົນ.

## ມາດຕາ 86. ສິດ ແລະ ໜ້າທີ່ຂອງອົງການກວດກາພາຍໃນ

ອົງການກວດກາພາຍໃນມີສິດ ແລະໜ້າທີ່ ກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍ, ການປະຕິບັດໜ້າທີ່ ແລະຄວາມຮັບຜິດຊອບຂອງລັດຖະການພາສີແຕ່ລະຂັ້ນທີ່ຕົນຮັບຜິດຊອບ ເປັນຕົ້ນແມ່ນການສ້າງແຜນການ, ການຄິດໄລ່ ແລະການຈັດເກັບພາສີ ແລະພັນທະອື່ນໆ ໃຫ້ຖືກ ຕ້ອງ, ຄົບຖ້ວນ ທັນກຳນົດເວລາຕາມລະບຽບກົດໝາຍ.

ລັດຖະບານ ເປັນຜູ້ກຳນົດລະບຽບການລະອຽດ ກ່ຽວກັບສິດ ແລະໜ້າທີ່ ຂອງອົງການ ກວດກາພາຍໃນຕໍ່ວຽກງານພາສີ.

## ມາດຕາ 87. ສິດ ແລະ ໜ້າທີ່ຂອງອົງການກວດກາພາຍນອກ

ອົງການກວດກາພາຍນອກມີສິດ ແລະໜ້າທີ່ ກວດກາການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່, ຄວາມຮັບຜິດຊອບ ຂອງລັດຖະການພາສີແຕ່ລະຂັ້ນ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ເພື່ອເຮັດໃຫ້ວຽກງານພາສີ ມີປະສິດທິພາບ, ມີຄວາມໂປ່ງໃສ ແລະຍຸຕິທຳ.

## ມາດຕາ 88. ຮູບການກວດກາ

ການກວດກາລັດຖະການພາສີ ປະກອບມີ ສາມ ຮູບການດັ່ງນີ້ :

- ການກວດກາຕາມລະບົບປົກກະຕິ;
- ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
- ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະມີກຳນົດ ເວລາອັນແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກ ກວດກາຊາບລ່ວງໜ້າ.

ໃນການດໍາເນີນການກວດກາລັດຖະການພາສີ, ເຈົ້າໜ້າທີ່ກວດກາຕ້ອງປະຕິບັດໃຫ້ຖືກ ຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ພາກທີ XIII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ໝວດທີ 1 ນະໂຍບາຍຕໍ່ຜູ້ມີຜົນງານ

#### ມາດຕາ 89. ການຍ້ອງຍໍ

ເຈົ້າໜ້າທີ່ພາສີ, ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນ ທີ່ໄດ້ປະກອບສ່ວນ ເຂົ້າໃນວຽກງານພາສີດ້ວຍການໃຫ້ຂໍ້ມູນ, ຂ່າວສານ, ການຈັບກຸມ ທາງກົງ ຫຼື ທາງອ້ອມ ກ່ຽວກັບການລະເມີດລະບຽບກົດໝາຍພາສີ ຈະໄດ້ຮັບການຍ້ອງຍໍ ຫລືນະໂຍບາຍອື່ນໆ ຊຶ່ງລັດຖະ ບານເປັນຜູ້ກໍານົດລະອຽດ.

#### ມາດຕາ 90. ນະໂຍບາຍຕໍ່ຜູ້ເສຍພາສີ ແລະ ພັນທະອື່ນໆ

ຜູ້ສົ່ງອອກ-ນໍາເຂົ້າສິນຄ້າ, ເຄື່ອງຂອງ ທີ່ມີຄວາມສັດຊື່ບໍລິສຸດ, ປະຕິບັດຢ່າງຖືກຕ້ອງ, ຄົບຖ້ວນ, ທັນກໍານົດເວລາຕາມລະບຽບກົດໝາຍ ຈະໄດ້ຮັບການຍ້ອງຍໍຊົມເຊີຍ ແລະ ຄວາມສະ ດວກໃນການເຄື່ອນໄຫວກ່ຽວກັບການສົ່ງອອກ-ນໍາເຂົ້າສິນຄ້າ, ເຄື່ອງຂອງ.

### ໝວດທີ 2 ມາດຕະການຕໍ່ຜູ້ລະເມີດ

#### ມາດຕາ 91. ມາດຕະການຕໍ່ພະນັກງານພາສີ

ພະນັກງານພາສີຜູ້ໃດ ຫາກໄດ້ກະທໍາຜິດຕໍ່ລະບຽບກົດໝາຍ ແຕ່ບໍ່ສ້າງຜົນເສຍຫາຍ ໃຫ້ແກ່ລາຍຮັບພາສີ ແລະ ພັນທະອື່ນໆ ແມ່ນຈະໄດ້ຖືກສຶກສາອົບຮົມ ແລະ ກ່າວເຕືອນ.

ສໍາລັບຜູ້ໃດ ຫາກໄດ້ກະທໍາຜິດຕໍ່ລະບຽບກົດໝາຍ ແລະສ້າງຜົນເສຍຫາຍບໍ່ຫຼວງຫຼາຍ ຕໍ່ ລາຍຮັບພາສີ ແລະ ພັນທະອື່ນໆ ໂດຍເຈດຕະນາ ແມ່ນຈະຖືກປະຕິບັດວິໄນຕາມລະບຽບການ ແລະ ທົດແທນຄ່າເສຍຫາຍ.

ສໍາລັບຜູ້ໃດ ທີ່ໄດ້ກະທໍາຜິດຕໍ່ລະບຽບກົດໝາຍ ແລະ ສ້າງຜົນເສຍຫາຍຫຼວງຫຼາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ບຸກຄົນ ເຊັ່ນ: ສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ, ໃຊ້ອໍານາດເກີນຂອບເຂດ, ປອມແປງເອກະສານ, ຮັບສິນບົນ ແມ່ນ ຈະຖືກດໍາເນີນຄະດີຕາມກໍລະນີເບົາ ຫຼື ໜັກ ຕາມທີ່ ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

### ມາດຕາ 92. ມາດຕະການຕໍ່ຜູ້ສົ່ງອອກ-ນຳເຂົ້າ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ສົ່ງອອກ-ນຳເຂົ້າໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດ ມາດຕະການຕ່າງໆ ເຊັ່ນ: ສຶກສາອົບຮົມ, ກ່າວເຕືອນ, ໃຊ້ແທນຄ່າເສຍຫາຍ ຫຼື ຖືກລົງໂທດທາງ ອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

### ມາດຕາ 93. ມາດຕະການອື່ນໆ

ນອກຈາກໂທດຕົ້ນຕໍທີ່ໄດ້ກຳນົດໄວ້ແຕ່ມາດຕາ 51 ຫາ 57 ຂອງກົດໝາຍສະບັບນີ້ແລ້ວ ຜູ້ກະທຳຜິດຈະຖືກຮິບສິນຄ້າ, ເຄື່ອງຂອງອີກໃນກໍລະນີດັ່ງຕໍ່ໄປນີ້ :

1. ສັບປ່ຽນ ຫຼື ພະຍາຍາມສັບປ່ຽນສິນຄ້າ, ເຄື່ອງຂອງ ໃນລະບອບງົດເກັບພາສີ;
2. ສັບປ່ຽນ ຫຼື ຖອນສິນຄ້າ, ເຄື່ອງຂອງອອກໃນເວລາຂົນສົ່ງຜ່ານແດນ;
3. ສັບປ່ຽນ ຫຼື ຖອນສິນຄ້າ, ເຄື່ອງຂອງ ທີ່ຢູ່ພາຍໃຕ້ການຄວບຄຸມຂອງພາສີ.

ຖ້າສານຫາກຕັດສິນລົງໂທດ ໃນຖານລະເມີດລະບອບງົດເກັບພາສີແລ້ວ ຜູ້ກະທຳຜິດຈະບໍ່ໄດ້ຮັບອະນຸຍາດໃຫ້ນຳເອົາສິນຄ້າ, ເຄື່ອງຂອງເຂົ້າ ຫຼື ອອກຊົ່ວຄາວ, ບໍ່ອະນຸຍາດໃຫ້ສົ່ງສິນຄ້າ, ເຄື່ອງຂອງຜ່ານແດນ, ບໍ່ອະນຸຍາດໃຫ້ເອົາສິນຄ້າ, ເຄື່ອງຂອງເຂົ້າໄວ້ໃນສາງເປັນການ ຊົ່ວຄາວ.

ບຸກຄົນໃດຫາກເອົາຊື່ຂອງຕົນໃຫ້ຜູ້ກະທຳຜິດສວຍໃຊ້ ເພື່ອຫຼີກລ້ຽງໂທດທີ່ກ່າວໄວ້ໃນວັກສອງເທິງນີ້ ຈະໄດ້ຮັບໂທດສະຖານດຽວກັນກັບຜູ້ກະທຳຜິດ.

ເມື່ອສິນຄ້າ, ເຄື່ອງຂອງ ທີ່ຄວນຮິບນັ້ນ ຫາກຍຶດບໍ່ໄດ້ ແຕ່ມີຫຼັກຖານຢັ້ງຢືນໜັກແໜ້ນ ລັດຖະການພາສີ ຈະຮ້ອງຂໍໃຫ້ສານຕັດສິນຮິບເປັນເງິນແທນກໍໄດ້.

ໃນກໍລະນີທີ່ມີການກະທຳຜິດຫຼາຍສະຖານ ຈະແມ່ນສະຖານເບົາ ຫຼື ໜັກ ກໍຕາມ, ການ ປະຕິບັດໂທດຕ່າງໆຈະເພີ່ມຂຶ້ນຕາມລະບຽບກົດໝາຍ ແຕ່ລະສະຖານຂອງການກະທຳຜິດຢ່າງເໝາະສົມ ລວມທັງໂຈະການສົ່ງອອກ-ນຳເຂົ້າ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ.

## ພາກທີ XIV ບົດບັນຍັດສຸດທ້າຍ

### ມາດຕາ 94. ການຈັດຕັ້ງປະຕິບັດ

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີໜ້າທີ່ອອກດຳ ລັດ ແລະຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 95. ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງເກົ້າສິບວັນ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ປ່ຽນແທນກົດໝາຍພາສີສະບັບເລກທີ 04/94 ສພຊ, ລົງວັນທີ 18/7/1994.

ທຸກຂໍ້ກຳນົດ, ກົດລະບຽບທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ